Oregon Department of Human Services

# ສິດທິແລະຄວາມຮັບຜິດ ຊອບຂອງທ່ານ

Oregon Health Authority

## ສິດທິແລະຄວາມຮັບຜິດຊອບຂອງທ່ານ

ຟອມນີ້ບອກລາຍການສິ່ງທີ່ກະຊວງປະຊາສົງເຄາະຣັຖອໍຣີກອນ ( Oregon Department of Human Services, DHS) ແລະ ອົງການສຸຂະພາບຣັຖອໍຣີກອນ (Oregon Health Authority, OHA) ຕ້ອງທີ່ຈະເຮັດເພື່ອທ່ານ. ສິ່ງເຫຼົ່ານີ້ກໍ່ ແມ່ນ "ສິດທິ" ຂອງທ່ານ. ນອກຈາກນີ້ ຍັງບອກກ່ຽວກັບສິ່ງທີ່ທ່ານຕ້ອງທີ່ຈະເຮັດ ເມື່ອທ່ານສະໝັກຂໍ ຫຼື ຮັບເອົາສິ່ງໃດໆ ຂ້າງລຸ່ມນີ້:

- ການຊ່ວຍເຫຼືອດ້ານເງິນສົດ
- ການຝາກເບິ່ງແຍງເດັກ
- ການຊ່ວຍເຫຼືອສຳລັບຄວາມຮຸນແຮງໃນຄອບຄົວ
- ການຊ່ວຍເຫຼືອດ້ານການປິ່ນປົວ
- ການຊ່ວຍເຫຼືອດ້ານອາຫານ

ສິ່ງເຫຼົ່ານີ້ແມ່ນ "ຄວາມຮັບຜິດຊອບ" ຂອງທ່ານ.

ກະລຸນາອ່ານຟອມນີ້ຢ່າງລະອຽດ. ທ່ານສາມາດຂໍໃຫ້ເຈົ້າໜ້າທີ່ DHS ອະທິບາຍຟອມນີ້ໃຫ້ທ່ານຟັງ. ຖາມຄຳຖາມຕ່າງໆ ຖ້າວ່າ ມີສິ່ງໃດທີ່ທ່ານບໍ່ເຂົ້າໃຈ. ທ່ານຕ້ອງທີ່ຈະເຮັດບາງສິ່ງທີ່ແນ່ນອນໃດນຶ່ງ ເມື່ອທ່ານ (ແລະຄອບຄົວຂອງທ່ານ) ຮັບເອົາຜົນປະໂຫຍດການຊ່ວຍເຫຼືອຈາກ DHS ຫຼື OHA. ທ່ານອາດເສັຽຜົນປະໂຫຍດເຫຼົ່ານັ້ນ ຫຼື ຈຳເປັນຕ້ອງຈ່າຍຄືນໃຫ້ແກ່ DHS ຫຼື OHA, ຖ້າທ່ານໄດ້ຮັບຫຼາຍກວ່າທີ່ທ່ານຄວນຈະໄດ້.

## ສິດທິຂອງທ່ານ (ສິ່ງທີ່ທ່ານສາມາດຄາດຫວັງໄດ້ຈາກ DHS ແລະ OHA):

- DHS ແລະ OHA ຈະປະຕິບັດຕໍ່ທ່ານດ້ວຍການໃຫ້ກຽດໃນຮູບແບບທີ່ເປັນທັມແລະສຸພາບ.
- ທ່ານມີສິດທີ່ຈະຖາມ ແລະສະໝັກຂໍຈາກໂຄງການໃດໆ ຂອງ DHS ຫຼື OHA. ນອກຈາກນີ້ ພວກເຮົາຍັງອາດແນະນຳທ່ານໄປຮັບການບໍລິການອື່ນໆ ທີ່ທ່ານຕ້ອງການ.
- ທ່ານສາມາດຖາມເອົາໃບຮັບສຳລັບຟອມໃດໆ ທີ່ທ່ານສົ່ງໃຫ້ແກ່ຫ້ອງການ DHS ຫຼື OHA.
- ທ່ານສາມາດຖາມເອົາການປະຊຸມພົບປະກັບພະນັກງານກຳກັບການຊ່ວຍເຫຼືອໄດ້. ນອກຈາກນີ້ ທ່ານສາມາດຖາມເພື່ອລົມກັບບຸກຄົນທີ່ຮັບຜິດຊອບ.
- ທ່ານສາມາດຂໍຄວາມຊ່ວຍເຫຼືອໃນການສະໝັກ, ປະກອບຟອມ, ຫຼື ລາຍງານການປ່ຽນແປງໃນພາສາທີ່ທ່ານຕ້ອງການໄດ້.
- DHS ຫຼື OHA ຈະໃຫ້ຂໍ້ມູນແກ່ທ່ານໃນຮູບແບບ ຫຼື ພາສາທີ່ທ່ານສາມາດເຂົ້າໃຈໄດ້.
- DHS ຫຼື OHA ຈະເຮັດໃຫ້ດີທີ່ສຸດເພື່ອໃຫ້ກົງກັບຄວາມຕ້ອງການສະເພາະຂອງທ່ານ ຖ້າວ່າ ທ່ານມີຄວາມພິການ. DHS ແລະ OHA ປະຕິບັດຕາມກົດໝາຍວ່າດ້ວຍຊາວອາເມລິກັນທີ່ພິການ (Americans with Disabilities Act) ແລະມາດຕາ 504 ຂອງກົດໝາຍວ່າດ້ວຍການຟື້ນຄືນສະມັຖພາບ (Rehabilitation Act).
- ທ່ານສາມາດຂໍເບິ່ງຖ້ອຍຄຳຖະແຫຼງກ່ຽວກັບທ່ານໃນແຟ້ມກໍລະນີຂອງທ່ານໄດ້.
- ຖ້າວ່າ ທ່ານມີ "ສາເຫດທີ່ດີ," ທ່ານສາມາດຂໍບໍ່ເຮັດວຽກຮ່ວມມືກັບພະແນກດູແລຄ່າລ້ຽງດູລູກ. ສາເຫດທີ່ດີ ໝາຍເຖິງວ່າ ການເກັບເອົາເງິນຄ່າລ້ຽງດູລູກ ຈະເຮັດໃຫ້ທ່ານ ຫຼື ລູກຂອງທ່ານຕົກຢູ່ໃນອັນຕະລາຍ. DHS ແລະ OHA ຈະໃຫ້ຟອມແກ່ທ່ານ ຊຶ່ງຈະອະທິບາຍກ່ຽວກັບ ສາເຫດທີ່ດີ. ຟອມເຫຼົ່ານີ້ຈະບອກທ່ານກ່ຽວກັບ ວິທີການທີ່ໂຄງການຊ່ວຍເຫຼືອດ້ານຄ່າລ້ຽງດູລູກຂອງຣັຖອໍຣີກອນ (Oregon Child Support Program) ອາດສາມາດຊ່ວຍທ່ານໃຫ້ໄດ້ຮັບເງິນຄ່າລ້ຽງດູລູກ, ລວມເຖິງ ການຊ່ວຍເຫຼືອດ້ານການປິ່ນປົວເປັນເງິນສົດ, ໃນຂະນະຊ່ວຍຮັກສາຄວາມປອດ

ໃຫ້ແກ່ທ່ານ ແລະລູກຂອງທ່ານ. ນອກຈາກນີ້ DHS ແລະ OHA ຍັງສາມາດຕອບຄໍາຖາມທ່ານກ່ຽວກັບສາເຫດທີ່ດີໄດ້.

- ສິ່ງທີ່ທ່ານບອກກັບ DHS ແລະ OHA ພວກເຮົາຈະເກັບເປັນຄວາມລັບ. ທ່ານສາມາດເບິ່ງ 'ແຈ້ງການວ່າດ້ວຍແນວທາງປະຕິບັດດ້ານຄວາມເປັນສ່ວນຕົວ (notice of Privacy Practices)' ຂອງພວກເຮົາໄດ້ທາງອອນລາຍທີ່ https://apps.state.or.us/Forms/Served/me2090.pdf ຫຼື ທີ່ຕິດປະກາດໄວ້ໃນຫ້ອງການ DHS.
- ຖ້າວ່າ ທ່ານເປັນຜູ້ສູງອາຍຸ, ທ່ານມີສິດທີ່ຈະໄດ້ຮັບເງິນຈາກໂຄງການຊ່ວຍເຫຼືອດ້ານອາຫານເສີມສໍາລັບຜູ້ສູງອາຍຸ (Senior Farm Direct Nutrition Program, SFDNP), ຖ້າວ່າ ມີເງື່ອນໄຂເໝາະສົມ. ຢ່າງໃດກໍຕາມ, ທ່ານຈະບໍ່ສາມາດຮັບເອົາໄດ້ ຖ້າວ່າ ທ່ານໄດ້ເຂົ້າຮ່ວມໃນໂຄງການອາຫານເສີມຈາກຕະຫຼາດກະສິກອນສໍາລັບຜູ້ສູງອາຍຸ (Senior Farmers' Market Nutrition Program, SFMNP) ຂອງຣັຖແຫ່ງອື່ນ.
- DHS ແລະ OHA ຈະບອກທ່ານ ຖ້າວ່າ ທ່ານມີຄຸນສົມບັດເໝາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອພາຍໃນຈໍານວນວັນຂ້າງລຸ່ມນີ້:
    - 30 ວັນສໍາລັບການຊ່ວຍເຫຼືອດ້ານອາຫານ ແລະເງິນສົດ
    - 30 ວັນສໍາລັບເງິນຊ່ວຍເຫຼືອຈາກໂຄງການຊ່ວຍເຫຼືອຊົ່ວຄາວສໍາລັບກໍລະນີຄວາມຮຸນແຮງໃນຄອບຄົວ (Temporary Assistance for Domestic Violence, TA-DVS) – ຈະມີການຕັດສິນພາຍໃນ 16 ຊົ່ວໂມງເຮັດວຽກ ຫຼັງຈາກພວກເຮົາໄດ້ຮັບຂໍ້ມູນຂອງທ່ານທັງໝົດ ຍົກເວັ້ນວ່າ ທ່ານຈະຂໍແນວອື່ນ
    - 45 ວັນສໍາລັບການຊ່ວຍເຫຼືອອື່ນໆ
    - 7 ວັນສໍາລັບການຊ່ວຍເຫຼືອດ້ານອາຫານ ຈຶ່ງໄວຂຶ້ນ, ຖ້າວ່າ ທ່ານມີສິດເໝາະສົມ
    - 90 ວັນສໍາລັບການຕັດສິນໃຈທາງການແພດ ໂດຍອີງໃສ່ຄວາມພິການ (ຍົກເວັ້ນໃນສະພາບການທີ່ບໍ່ປົກກະຕິ)
- ທ່ານສາມາດຂໍເອົາການພິຈາລະນາຄະດີໄດ້ ຖ້າວ່າ ທ່ານບໍ່ເຫັນດີນໍາກັບການຕັດສິນຂອງ DHS ຫຼື OHA. ທ່ານຕ້ອງນໍາໃຊ້ຟອມຄໍາຮ້ອງຂໍເອົາການພິຈາລະນາຄະດີ (Administrative Hearing Request) (MSC 0443) ເມື່ອຄໍາຮ້ອງຂໍເອົາການພິຈາລະນາຄະດີແມ່ນກ່ຽວກັບຂໍ້ໃດໆ ຂ້າງລຸ່ມນີ້:
    - ເງິນສົດ
    - TA-DVS
    - ເງິນຊ່ວຍເຫຼືອຄ່າຝາກເບິ່ງແຍງເດັກ

ເຈົ້າໜ້າທີ່ DHS ສາມາດຊ່ວຍທ່ານປະກອບຟອມຄໍາຮ້ອງຂໍເອົາການພິຈາລະນາຄະດີໄດ້. ສໍາລັບການຊ່ວຍເຫຼືອດ້ານອາຫານ, ທ່ານສາມາດຂໍເອົາການພິຈາລະນາຄະດີໄດ້ໂດຍທາງໂທລະສັບ, ໂດຍຂຽນເປັນລາຍລັກອັກສອນ ຫຼື ໄປດ້ວຍຕົນເອງ. ຖ້າວ່າ ທ່ານໄດ້ຮັບການເບິ່ງແຍງຢູ່ເຮືອນ ແລະໃນຊຸມຊົນ ຫຼື ເຮືອນພັກຄົນຊະລາ ທ່ານຈະບໍ່ມີສິດຂໍເອົາການພິຈາລະນາຄະດີກ່ຽວກັບການທວງເອົາເງິນຊົດໃຊ້ຄືນຈາກຊັບສິນມໍລະດົກ. ຮຽນຮູ້ຕື່ມໃນພາກສ່ວນໂຄງການການຊົດໃຊ້ຄືນຈາກຊັບສິນມໍລະດົກ (Estate Recovery Program). ທ່ານຕ້ອງຂໍເອົາການພິຈາລະນາຄະດີພາຍໃນຈໍານວນວັນຂ້າງລຸ່ມນີ້, ຖ້າວ່າ ທ່ານໄດ້ຮັບການຊ່ວຍເຫຼືອເຫຼົ່ານີ້:

- 45 ວັນສໍາລັບການຊ່ວຍເຫຼືອດ້ານເງິນສົດ, ການຊ່ວຍເຫຼືອດ້ານຄວາມຮຸນແຮງໃນຄອບຄົວ, ຫຼື ການຊ່ວຍເຫຼືອຄ່າເບິ່ງແຍງເດັກ
- 90 ວັນສໍາລັບການຊ່ວຍເຫຼືອດ້ານເງິນສົດ ຖ້າວ່າ ທ່ານໄດ້ຂາດຄຸນສົມບັດ ໂດຍອີງໃສ່ແຜນກໍລະນີໃນໂຄງການ JOBS ຂອງທ່ານ. ນີ້ລວມເຖິງ ການຂາດຄຸນສົມບັດເນື່ອງຈາກບໍ່ໄປຮັບການປິ່ນປົວສໍາລັບພາວະໃດໜຶ່ງຂ້າງລຸ່ມນີ້:
    - ສຸຂະພາບຈິດ
    - ຢາເສບຕິດ
    - ເຫຼົ້າ
- 90 ວັນສໍາລັບການຊ່ວຍເຫຼືອດ້ານການປິ່ນປົວ ແລະດ້ານອາຫານ

**ຄວາມຮັບຜິດຊອບຂອງທ່ານ (ສິ່ງທີ່ທ່ານຕ້ອງເຮັດ):**

**ຖ້າວ່າ ທ່ານຢູ່ໃນໂຄງການໃດໆ ຂອງ DHS ຫຼື OHA, ທ່ານຕ້ອງ:**

- ໃຫ້ຂໍ້ມູນຄວາມຈິງ, ຖືກຕ້ອງ ແລະຄົບຖ້ວນ ແກ່ DHS ແລະ OHA.
- ໃຫ້ຫຼັກຖານຢັ້ງຢືນບາງສິ່ງທີ່ທ່ານລາຍງານ. ຖ້າວ່າ ທ່ານບໍ່ສາມາດຫາຫຼັກຖານ, ທ່ານຕ້ອງປ່ອຍໃຫ້ພວກເຮົາຕິດຕໍ່ຫາຄົນອື່ນ ຫຼື ອົງການອື່ນ ເພື່ອເອົາຫຼັກຖານທີ່ຈໍາເປັນ.
- ໃຫ້ລາຍງານກ່ຽວກັບຄ່າໃຊ້ຈ່າຍໃນເວລາເຂົ້າເຖິງ TA-DVS.
- ເຂົ້າຮ່ວມໃນໂຄງການຊ່ວຍເຫຼືອດ້ານວຽກງານ ແລະການຝຶກອົບຮົມ ຖ້າວ່າ ພວກເຮົາຕ້ອງການໃຫ້ທ່ານເຮັດແນວນັ້ນ. ນອກຈາກນີ້ ພວກເຮົາອາດກໍານົດໃຫ້ທ່ານຕ້ອງຊອກຫາວຽກ, ຍອມຮັບ ແລະຮັກສາວຽກເອົາໄວ້. ຂໍ້ກໍານົດນີ້ນໍາໃຊ້ບໍ່ໄດ້ກັບໂຄງການດ້ານການປິ່ນປົວ.
- ອະນຸຍາດໃຫ້ເຈົ້າໜ້າທີ່ຂອງ DHS ແລະ OHA ໄປຢ້ຽມຢາມທ່ານຢູ່ເຮືອນ ເພື່ອເອົາຂໍ້ມູນກ່ຽວກັບກໍລະນີຂອງທ່ານ.
- ລາຍງານການປ່ຽນແປງຕ່າງໆ ຕໍ່ທາງ DHS ແລະ OHA.
- ຊ່ວຍ DHS ແລະ OHA ເອົາຫຼັກຖານ ຖ້າວ່າ ກໍລະນີຂອງທ່ານຖືກເລືອກເພື່ອກວດກາຄືນ. ການເລືອກກໍລະນີເພື່ອຮ່ວມໃນການກວດກາຄືນແມ່ນເຮັດໂດຍການສຸ່ມເອົາ.
- ອະນຸຍາດໃຫ້ປ່ອຍບັນທຶກຄ່າລ້ຽງດູລູກຂອງທ່ານຈາກກົມຍຸດຕິທໍາ, ພະແນກຄ່າລ້ຽງດູລູກ, ໂດຍເອົາໃຫ້ແກ່ DHS ແລະ OHA, ເວັ້ນແຕ່ວ່າ ທ່ານມີສາເຫດທີ່ດີ.

**ຖ້າວ່າ ທ່ານຮັບເອົາການຊ່ວຍເຫຼືອດ້ານອາຫານ, ທ່ານຍັງຕ້ອງ:**

- ເຮັດສິ່ງທັງໝົດຂ້າງລຸ່ມນີ້, ເວັ້ນແຕ່ວ່າ ທ່ານມີສາເຫດທີ່ດີ:
  - ຫ້າມອອກຈາກວຽກ
  - ຫ້າມຫຼຸດຊົ່ວໂມງເຮັດວຽກຂອງທ່ານລົງຕໍ່າກວ່າ 30 ຊົ່ວໂມງຕໍ່ອາທິດ
  - ຍອມຮັບວຽກທີ່ສະເໜີໃຫ້
- ລາຍງານແລະໃຫ້ຫຼັກຖານຄ່າໃຊ້ຈ່າຍລຸ່ມນີ້, ຖ້າວ່າ ທ່ານຕ້ອງການໃຫ້ນໍາໃຊ້ໃນການຄິດໄລ່ເງິນຊ່ວຍເຫຼືອດ້ານອາຫານຂອງທ່ານ:
  - ຄ່າປິ່ນປົວ
  - ຄ່າສາທາລະນູປະໂພກ
  - ເງິນຄ່າລ້ຽງດູຕາມຄໍາສັ່ງສານ
  - ຄ່າລ້ຽງດູຜູ້ຢູ່ໃຕ້ການດູແລ

  ຖ້າວ່າ ທ່ານບໍ່ລາຍງານຄ່າໃຊ້ຈ່າຍເຫຼົ່ານີ້ ຫຼື ບໍ່ຢັ້ງຢືນເມື່ອຖືກຖາມ, ຂໍ້ມູນຄ່າໃຊ້ຈ່າຍນີ້ກໍຈະບໍ່ຖືກນໍາໄປຄິດໄລ່ໃສ່ເງິນຊ່ວຍເຫຼືອດ້ານອາຫານຂອງທ່ານ. ຖ້າວ່າ ທ່ານບໍ່ລາຍງານການປ່ຽນແປງຕ່າງໆ ແລະຮັບເອົາເງິນຊ່ວຍເຫຼືອຫຼາຍເກີນໄປ, ທ່ານອາດຕ້ອງຈ່າຍຄືນໃຫ້ແກ່ DHS ຫຼື OHA.
- ເຂົ້າຮ່ວມໃນແຜນການຈ້າງງານ ແລະການຝຶກອົບຮົມ ທີ່ສະເໜີໃຫ້ໂດຍ DHS ຫຼື OHA ຫຼື ອົງການທີ່ເປັນພັນທະມິດຂອງພວກເຮົາ.

**ຖ້າວ່າ ທ່ານໄດ້ຮັບການຊ່ວຍເຫຼືອຈາກໂຄງການການຊ່ວຍເຫຼືອຊົ່ວຄາວສໍາລັບຄອບຄົວທີ່ຈໍາເປັນ (Temporary Assistance for Needy Families, TANF) ຫຼື ການຊ່ວຍເຫຼືອດ້ານເງິນສົດສໍາລັບຜູ້ອົບພະຍົບ, ທ່ານຍັງຕ້ອງ:**

- ຮັບການກວດກາທາງການແພດທີ່ຈໍາເປັນ ເພື່ອເບິ່ງວ່າ ທ່ານມີຄຸນສົມບັດເໝາະສົມສໍາລັບການບໍລິການສະເພາະຫຼືບໍ່.
- ສະໝັກຂໍ ແລະນໍາໃຊ້ການຊ່ວຍເຫຼືອອື່ນໃດ ຫຼື ເງິນຊ່ວຍເຫຼືອ ຊຶ່ງທ່ານມີຄຸນສົມບັດທີ່ຈະໄດ້ຮັບ. ທ່ານຕ້ອງເຮັດແນວນີ້ສໍາລັບທ່ານ ແລະຄົນອື່ນໆ ທີ່ທ່ານຕ້ອງການຊ່ວຍເຫຼືອ. ສິ່ງນີ້ອາດລວມເຖິງຂ້າງລຸ່ມນີ້:
  - ປະກັນໄພການຫວ່າງງານ
  - ຜົນປະໂຫຍດຈາກປະກັນສັງຄົມ
  - ຄວາມຄຸ້ມຄອງການບາດເຈັບສ່ວນບຸກຄົນທີ່ບໍ່ມີຄວາມຜິດ, ຊຶ່ງຢູ່ໃນປະກັນໄພຣົຖທັງໝົດ

- ຍອມຮັບການບໍລິການເພື່ອສັງຄົມ ຊຶ່ງສານສັ່ງ ຫຼື ກ່ຽວພັນກັບການຝຶກອົບຮົມ ຫຼື ການຈ້າງງານ
- ໄປທີ່ໂຄງການສຸຂະພາບຈິດ ແລະຢາເສບຕິດ ຫຼື ເຫຼົ້າ, ຖ້າວ່າ DHS ຫຼື OHA ພິຈາລະນາຕັດສິນວ່າ ທ່ານຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອ. ທ່ານຈະຕ້ອງເຮັດສິ່ງນີ້ສະເພາະຖ້າວ່າ ທ່ານສາມາດເຂົ້າໂຄງການໄດ້ ຊຶ່ງທ່ານບໍ່ຕ້ອງເສັຽຄ່າ.
- ລາຍງານຕໍ່ພະແນກດູແລຄ່າເສັຽຫາຍຈາກການບາດເຈັບສ່ວນບຸກຄົນ (Personal Injury Liens Unit) ພາຍໃນ 10 ວັນ ຖ້າວ່າ **ທ່ານ ຫຼື ໃຜກໍ່ຕາມໃນຄອບຄົວຂອງທ່ານ** ເຮັດທັງສອງສິ່ງດັ່ງລຸ່ມນີ້:
  - ຮັບເງິນຊ່ວຍເຫຼືອ TANF.
  - ມີການທວງເອົາຄ່າເສັຽຫາຍຈາກບຸກຄົນທີ່ເປັນສາເຫດເຮັດໃຫ້ເກີດການບາດເຈັບ.

**ໃນ TANF, ທ່ານຕ້ອງຊ່ວຍເຫຼືອໃນການຂໍເອົາເງິນຄ່າລ້ຽງດູລູກ ເວັ້ນແຕ່ວ່າ:**

- ຂໍ້ໃດໜຶ່ງຂ້າງລຸ່ມນີ້ແມ່ນຄວາມຈິງ:
  - ທ່ານຢູ່ໃນໂຄງການ JOBS Plus
  - ທ່ານຢູ່ໃນໂຄງການຊ່ວຍເຫຼືອຜູ້ພິການ (State Family Pre- Social Security Insurance (SSI)) ແລະໂຄງການປະກັນໄພຜູ້ພິການ (Social Security Disability Insurance, SSDI) (SFPSS)
  - ທ່ານຢູ່ໃນໂຄງການ Post-TANF
  - ທ່ານມີສິດທີ່ຈະໄດ້ຮັບເງິນສົດສຳລັບຄອບຄົວໃນຖານະເປັນຄອບຄົວທີ່ມີພໍ່ແມ່ສອງຄົນ
  - ທ່ານກຳລັງຮັບເອົາເງິນຊ່ວຍເຫຼືອດ້ານການຈ້າງງານ
- ມັນຈະເຮັດໃຫ້ທ່ານ ແລະລູກຂອງທ່ານຕົກຢູ່ໃນອັນຕະລາຍ. ໃຫ້ແນ່ໃຈວ່າໄດ້ບອກ DHS ຫຼື OHA.

**ຖ້າວ່າ ທ່ານໄດ້ຮັບເງິນຊ່ວຍເຫຼືອຄ່າຝາກເບິ່ງແຍງເດັກຍາມກາງເວັນ ຊຶ່ງກ່ຽວພັນກັບການມີວຽກເຮັດງານທຳ (Employment Related Day Care, ERDC), ທ່ານຕ້ອງ:**

- ຈ່າຍຄ່າຈ່າຍຮ່ວມສຳລັບ ERDC ຂອງທ່ານໃຫ້ແກ່ ຜູ້ໃຫ້ບໍລິການເບິ່ງແຍງເດັກໃນແຕ່ລະເດືອນ ເພື່ອສືບຕໍ່ມີເງື່ອນໄຂໄດ້ຮັບ.
- ບອກ DHS ທັນທີ ຖ້າວ່າ ທ່ານເສັຽວຽກ ຫຼື ທ່ານລາປ່ວຍ. DHS ອາດສືບຕໍ່ຈ່າຍຄ່າເບິ່ງແຍງເດັກໃນຊ່ວງເວລາທີ່ທ່ານກຳລັງຊອກຫາວຽກເຮັດ ຫຼື ໃນລະຫວ່າງທ່ານລາປ່ວຍ.
- ທ່ານມີສິດທີ່ຈະເລືອກຜູ້ໃຫ້ບໍລິການເບິ່ງແຍງເດັກ. ຕິດຕໍ່ DHS ຫຼືໂທ 211 ເພື່ອຂໍຄວາມຊ່ວຍເຫຼືອໃນການຊອກຫາຜູ້ໃຫ້ບໍລິການເບິ່ງແຍງເດັກ.
- ເລືອກຜູ້ໃຫ້ບໍລິການເບິ່ງແຍງເດັກທີ່ສາມາດເຮັດທຸກສິ່ງຂ້າງລຸ່ມນີ້ກັບ DHS:
  - ເຮັດໄດ້ຕາມຂໍ້ກຳນົດສຳລັບຜູ້ໃຫ້ບໍລິການເບິ່ງແຍງເດັກ
  - ເຮັດໄດ້ຕາມມາດຕະຖານດ້ານສຸຂະພາບ ແລະຄວາມປອດໄພ
  - ຢູ່ໃນລາຍຊື່ ແລະໄດ້ຮັບການອະນຸມັດ

**ຖ້າວ່າ ທ່ານໄດ້ຮັບການຊ່ວຍເຫຼືອດ້ານການປິ່ນປົວ, ທ່ານຕ້ອງ:**

- ສະໝັກຂໍ ແລະນຳໃຊ້ຜົນປະໂຫຍດບາງຢ່າງ ຫຼື ເງິນຊ່ວຍເຫຼືອ ຊຶ່ງທ່ານມີຄຸນສົມບັດທີ່ຈະໄດ້ຮັບ. ສິ່ງນີ້ອາດລວມເຖິງຂໍ້ໃດໜຶ່ງຂ້າງລຸ່ມ:
  - ເງິນປະກັນສັງຄົມ
  - ເງິນບຳນານກົມຣົຖໄຟ
  - ເງິນຊ່ວຍເຫຼືອທະຫານຜ່ານເສິກ
  - ເງິນຊ່ວຍເຫຼືອຄ່າທີ່ພັກ ແລະຢູ່ນ່ຽນ
  - ຄວາມຄຸ້ມຄອງການບາດເຈັບສ່ວນບຸກຄົນທີ່ບໍ່ມີຄວາມຜິດ, ຊຶ່ງຢູ່ໃນປະກັນໄພຣົຖທັງໝົດ
  - ປະກັນໄພເງິນຊົດເຊີຍແຮງງານ
  - ປະກັນໄພການເບິ່ງແຍງໄລຍະຍາວ
  - ປະກັນໄພດ້ານການປິ່ນປົວ

- Medicare
- ໄປຮັບການກວດສຸຂະພາບທີ່ຈຳເປັນເພື່ອໃຫ້ການສະໝັກຂອງທ່ານສົມບູນສຳລັບການຂໍການຊ່ວຍເຫຼືອດ້ານການປິ່ນປົວ.
- ບອກຜູ້ໃຫ້ບໍລິການປິ່ນປົວ ຖ້າວ່າ ທ່ານມີປະກັນໄພຄຸ້ມຄອງສຸຂະພາບອື່ນ. ຕົວຢ່າງແມ່ນລະບຸໄວ້ດັ່ງລຸ່ມນີ້:
  - Medicare
  - ເງິນຊ່ວຍເຫຼືອທະຫານຜ່ານເສິກ
  - ປະກັນໄພເງິນຊົດເຊີຍແຮງງານ
  - ການຄຸ້ມຄອງການບາດເຈັບສ່ວນບຸກຄົນທີ່ບໍ່ມີຄວາມຜິດ ຊຶ່ງຢູ່ໃນປະກັນໄພຣົຖທັງໝົດ
  - ການຄຸ້ມຄອງສຸຂະພາບອື່ນໆ

  ຜູ້ໃຫ້ບໍລິການຄວນສົ່ງໃບເກັບຄ່າໄປທີ່ປະກັນໄພກ່ອນເຂົາເຈົ້າຈະສົ່ງໃບເກັບຄ່າໄປທີ່ DHS ຫຼື OHA ສຳລັບຄ່າປິ່ນປົວຂອງທ່ານ.
  ໃຫ້ເລກປະຈຳຕົວຄົນເຈັບທີ່ຣັຖອອກໃຫ້ ກ່ອນຮັບການບໍລິການຕ່າງໆ.

- ຖ້າວ່າກຳນົດໄວ້, ໃຫ້ຈ່າຍປະຈຳເດືອນເພື່ອສືບຕໍ່ໄດ້ຮັບຜົນປະໂຫຍດການຊ່ວຍເຫຼືອດ້ານການປິ່ນປົວ ແລະ ການບໍລິການຕ່າງໆ. ຈຳນວນເຫຼົ່ານີ້ອາດດັດປັບໄດ້, ເພື່ອປ່ຽນແປງໃນສະຖານະການທາງການເງິນຂອງທ່ານ.
- ລາຍງານຕໍ່ພະແນກດູແລຄ່າເສັຽຫາຍຈາກການບາດເຈັບສ່ວນບຸກຄົນ (Personal Injury Liens Unit) ພາຍໃນ 10 ວັນ ຖ້າວ່າ **ທ່ານ ຫຼື ໃຜກໍຕາມໃນຄອບຄົວຂອງທ່ານ** ເຮັດທັງສອງສິ່ງດັ່ງລຸ່ມນີ້:
  - ຮັບເອົາການຊ່ວຍເຫຼືອດ້ານການປິ່ນປົວ ຫຼື ຜົນປະໂຫຍດການຊ່ວຍເຫຼືອໃນແຜນສຸຂະພາບຣັຖອໍຣິກອນ (OHP).
  - ມີການທວງເອົາຄ່າເສັຽຫາຍຈາກບຸກຄົນທີ່ເປັນສາເຫດເຮັດໃຫ້ເກີດການບາດເຈັບ.

## ການຮັບຮູ້ກ່ຽວກັບໂຄງການ

### ຂໍ້ມູນກ່ຽວກັບການຊ່ວຍເຫຼືອດ້ານເງິນສົດ

ການຊ່ວຍເຫຼືອດ້ານເງິນສົດ ຍັງຮູ້ຈັກໃນຊື່ອີກສອງຊື່ດັ່ງລຸ່ມ:

- ການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວທີ່ຈຳເປັນ (Temporary Assistance for Needy Families, TANF)
- ການຊ່ວຍເຫຼືອດ້ານເງິນສົດສຳລັບຜູ້ອົບພະຍົບ (Refugee Cash Assistance)

ການຊ່ວຍເຫຼືອດ້ານເງິນສົດມີຈຸດປະສົງເພື່ອສະໜອງຕອບຕໍ່ຄວາມຈຳເປັນຂັ້ນພື້ນຖານຂອງຄອບຄົວ. ຕົວຢ່າງສຳລັບສິ່ງຕ່າງໆ ເຊັ່ນດັ່ງລຸ່ມນີ້:

- ອາຫານ
- ເຄື່ອງນຸ່ງ
- ທີ່ພັກອາໄສຊົ່ວຄາວ
- ສາທາລະນູປະໂພກ

ການອອກບັດເງິນຊ່ວຍເຫຼືອທາງອີເລັກໂຕຣນິກ ( Electronic Benefit Transfer, EBT) ກໍແມ່ນວິທີການທີ່ຄົນສ່ວນໃຫຍ່ໄດ້ຮັບການຊ່ວຍເຫຼືອດ້ານເງິນສົດໃນຣັຖອໍຣິກອນ. ບັດນີ້ຍັງຮູ້ຈັກໃນຊື່ ບັດ Oregon Trail Card. ບັດນີ້ບໍ່ສາມາດເອົາໄປໃຊ້ສຳລັບການຊ່ວຍເຫຼືອດ້ານເງິນສົດ ແລະຕ້ອງບໍ່ຖືກເອົາໄປໃຊ້ໃນບ່ອນໃດໜຶ່ງດັ່ງລຸ່ມ:

- ຮ້ານຂາຍເຫຼົ້າ. ນີ້ລວມເຖິງ ທຸລະກິດຂາຍຍ່ອຍ ຊຶ່ງຂາຍສະເພາະ ຫຼື ສ່ວນຫຼາຍ ຂາຍເບັຽ ຫຼື ວາຍ.
- ຄາສິໂນ ຫຼື ສະຖານທີ່ຫຼິ້ນພະນັນ
- ທຸລະກິດບັນເທີງຍ່ອຍສຳລັບຜູ້ໃຫຍ່ ທີ່ມີຄົນບໍ່ນຸ່ງເສື້ອຜ້າ ຫຼື ນຸ່ງໂປ້. ນີ້ລວມເຖິງ ຮ້ານວີດີໂອສຳລັບຜູ້ໃຫຍ່ ຊຶ່ງສ່ວນຫຼາຍ ຂາຍ ຫຼື ສະແດງວີດີໂອ ຫຼື ໜັງສຳລັບຜູ້ໃຫຍ່.
- ສະຖານທີ່ແຈກຈ່າຍກັນຊາ

ຂໍ້ຈຳກັດເຫຼົ່ານີ້ນຳໃຊ້ກັບທຸກແຫ່ງທີ່ທ່ານໃຊ້ບັດ Oregon Trail Card ຂອງທ່ານ ເພື່ອຖອນເງິນ ຫຼື ໃຊ້ຈ່າຍເງິນສົດ. ຂໍ້ຈຳກັດເຫຼົ່ານີ້ຍັງນຳໃຊ້ເມື່ອທ່ານຖອນເງິນ ຫຼື ໃຊ້ຈ່າຍເງິນຊ່ວຍເຫຼືອທີ່ເປັນເງິນສົດ ຈາກບັນຊີທະນາຄານສ່ວນຕົວ.

ຖ້າວ່າ ທ່ານໄດ້ຮັບເງິນຊ່ວຍເຫຼືອຊົ່ວຄາວສໍາລັບຜູ້ລອດຊີວິດຈາກເຫດຄວາມຮຸນແຮງໃນຄອບຄົວ (Temporary Assistance for Domestic Violence Survivors, TA-DVS):
ເງິນຊ່ວຍເຫຼືອຊົ່ວຄາວສໍາລັບຜູ້ລອດຊີວິດຈາກເຫດຄວາມຮຸນແຮງໃນຄອບຄົວ (TA-DVS) ແມ່ນການຊ່ວຍເຫຼືອດ້ານເງິນສົດ ເພື່ອຈັດຫາ:

- ການຊ່ວຍເຫຼືອທາງການເງິນຊົ່ວຄາວ ແລະສະໜັບສະໜູນບັນດາຄອບຄົວຕ່າງໆ ທີ່ໄດ້ຮັບຜົນກະທົບຈາກຄວາມຮຸນແຮງໃນຄອບຄົວ.
  - ໃນລະຫວ່າງວິກິດການ ຫຼື ສະຖານະການຮີບດ່ວນ.
  - ໃນກໍລະນີທີ່ແຫຼ່ງຊ່ວຍເຫຼືອອື່ນໆ ບໍ່ມີໃຫ້.

ເງິນຊ່ວຍເຫຼືອ TA-DVS ຈະຖືກຈ່າຍເປັນເຊັກໃຫ້ແກ່ຜູ້ຂາຍ ຫຼື ຜູ້ຮັບເງິນແບບສອງຄົນ.

DHS ຈະຖາມຄໍາຖາມກ່ຽວກັບສະຖານະການຄວາມຮຸນແຮງໃນຄອບຄົວຂອງທ່ານ. ກ່ອນຈະມີການອະນຸມັດການຈ່າຍເງິນໃດໆ, ທາງ DHS ກໍານົດວ່າ ທ່ານຕ້ອງສ້າງແຜນຄວາມປອດໄພຮ່ວມກັບພວກເຮົາ. ການກວດສອບຄວາມຖືກຕ້ອງແມ່ນຈໍາເປັນສໍາລັບທຸກການຈ່າຍເງິນທີ່ທາງ TA-DVS ອອກໃຫ້. ທຶນຕ່າງໆ ທີ່ບໍ່ຖືກນໍາໃຊ້ເພື່ອຄວາມປອດໄພໃນລະຫວ່າງໄລຍະການມີເງື່ອນໄຂເໝາະສົມ 90 ວັນຂອງທ່ານ ຈະຕ້ອງເກັບໄວ້ກັບ DHS. ຖ້າວ່າ ທ່ານຂໍເອົາການຊ່ວຍເຫຼືອດ້ານຄວາມຮຸນແຮງໃນຄອບຄົວ ຫຼາຍກວ່າໜຶ່ງຄັ້ງໃນໄລຍະ 12 ເດືອນ, ອາດຈໍາເປັນຕ້ອງມີການກວດກາຄືນໃບສະໝັກໃໝ່ຂອງທ່ານ.

ຖ້າວ່າ ທ່ານໄດ້ຮັບ TANF:
ການມອບໝາຍການຈ່າຍເງິນ ແລະ ການຍຶດຊັບສິນ
ເພື່ອໃຫ້ມີເງື່ອນໄຂເໝາະສົມສໍາລັບ TANF, ທ່ານຕ້ອງປ່ອຍໃຫ້ DHS ຫຼື OHA ເກັບເອົາເງິນໃດໆ ທີ່:

- ທ່ານ ຫຼື ຜູ້ອື່ນໆ ທີ່ໄດ້ຮັບ TANF ກັບທ່ານ ໄດ້ຮັບ ຫຼື ມີສິດທີ່ຈະໄດ້ຮັບຈາກບຸກຄົນຝ່າຍທີ່ຮັບຜິດຊອບຕາມກົດໝາຍສໍາລັບການບາດເຈັບໃດໜຶ່ງ.

ນີ້ລວມເຖິງ ເງິນຈາກຂໍ້ໃດໆ ດັ່ງລຸ່ມນີ້:

- ປະກັນສຸຂະພາບຂອງເອກະຊົນ
- ປະກັນໄພຣົຖ
- ຜູ້ຄົນ
- ແຫຼ່ງອື່ນໆ

ຂໍ້ຂ້າງເທິງນີ້ແມ່ນເອີ້ນວ່າ "ການມອບໝາຍການຈ່າຍເງິນ" ໃຫ້ແກ່ DHS ຫຼື OHA. ເພື່ອສືບຕໍ່ໄດ້ຮັບເງິນຊ່ວຍເຫຼືອ TANF ທ່ານ ແລະສະມາຊິກອື່ນໆ ໃນຄອບຄົວ (ຊຶ່ງລວມເຖິງ ເດັກໃດໆ ທີ່ຈະເກີດມາໃນອະນາຄົດ) ຕ້ອງຊ່ວຍ DHS ຫຼື OHA ຊອກຫາ ແລະຮັບເອົາການຈ່າຍເງິນເຫຼົ່ານີ້ ໂດຍວິທີການທັງໝົດດັ່ງລຸ່ມນີ້:

- ບອກ DHS, OHA ແລະອົງການຈັດການການເບິ່ງແຍງ ( coordinated care organization, CCO) ຂອງທ່ານວ່າ ຝ່າຍທີສາມໄດ້ເຮັດໃຫ້ທ່ານ ຫຼື ສະມາຊິກໃນຄອບຄົວ ບາດເຈັບ ພາຍໃນ 10 ວັນ.
- ໃຫ້ຂໍ້ມູນກ່ຽວກັບຝ່າຍຕ່າງໆ ທີ່ເປັນສາເຫດໃຫ້ເກີດການບາດເຈັບ.
- ຊ່ວຍເຫຼືອກ່ຽວກັບຂໍ້ມູນອື່ນໃດກໍຕາມທີ່ຖືກຮຽກຮ້ອງເອົາ. ນີ້ລວມເຖິງ ຂໍ້ມູນກ່ຽວກັບການປະກັນໄພ. ມີການຈໍາກັດຈໍານວນເງິນທີ່ DHS ຫຼື OHA ສາມາດເກັບເອົາໄດ້. ຈໍານວນເງິນຕ້ອງບໍ່ກາຍຈໍານວນທີ່ຖືກຈ່າຍນັບແຕ່ວັນທີຂອງການບາດເຈັບໃຫ້ແກ່ທ່ານເມື່ອທ່ານຖືກຈ່າຍໃຫ້ໂດຍຝ່າຍທີ່ຮັບຜິດຊອບສໍາລັບການບາດເຈັບ. ຖ້າວ່າ ທັງສອງກໍລະນີຂ້າງລຸ່ມນີ້ເກີດຂຶ້ນ, ທ່ານຍັງອາດຕ້ອງຈ່າຍຄືນໃຫ້ແກ່ພວກເຮົາ:

- ເງິນຊ່ວຍເຫຼືອດ້ານການປິ່ນປົວຂອງ DHS ຫຼື OHA ທີ່ຈ່າຍໃຫ້ສໍາລັບຄ່າບໍລິການປິ່ນປົວ.
- ທ່ານໄດ້ຮັບເງິນຈາກບຸກຄົນທີ່ຮັບຜິດຊອບສໍາລັບການບາດເຈັບຂອງທ່ານ.

ເບິ່ງຂໍ້ມູນກ່ຽວກັບພາກສ່ວນ ການຊ່ວຍເຫຼືອດ້ານເງິນສົດ.

ສິ່ງທີ່ທ່ານຈຳເປັນຕ້ອງຮູ້ກ່ຽວກັບ "ການມອບໝາຍເງິນຄ່າລ້ຽງດູ"
"ເງິນຄ່າລ້ຽງດູ" ໝາຍເຖິງ ເງິນທີ່ທ່ານໄດ້ຮັບສຳລັບທ່ານ ຫຼື ລູກຂອງທ່ານ, ເຊັ່ນເງິນຄ່າລ້ຽງດູພັນລະຍາ ຫຼື ຄ່າລ້ຽງດູລູກ. ເມື່ອທ່ານໄດ້ຮັບການຊ່ວຍເຫຼືອດ້ານເງິນສົດ, ທ່ານ "ມອບໝາຍ" ໃຫ້ຣັຖມີສິດທີ່ຈະເກັບກຳເອົາເງິນຄ່າລ້ຽງດູທີ່ທ່ານ ຫຼື ໃຜກໍຕາມໃນຄອບຄົວຂອງທ່ານໄດ້ຮັບຈາກບຸກຄົນອື່ນ. ເງິນນັ້ນຈະຖືກນຳໄປຈ່າຍຄືນໃຫ້ແກ່ຣັຖສຳລັບເງິນສົດທີ່ທ່ານໄດ້ຮັບ.
**ໝາຍເຫດ:** ເງື່ອນໄຂນີ້ນຳໃຊ້ບໍ່ໄດ້ໃນລະຫວ່າງຊ່ວງເວລາໃດກໍຕາມທີ່ທ່ານໄດ້ຮັບການຊ່ວຍເຫຼືອດ້ານເງິນສົດຈາກໂຄງການໃດໆ ດັ່ງລຸ່ມນີ້:

- ໂຄງການ JOBS Plus
- ໂຄງການ State Family Pre-SSI/SSDI (SFPSS)
- ໂຄງການ Post-TANF
- ໃນກໍລະນີທີ່ທ່ານເປັນຄອບຄົວທີ່ມີພໍ່ແມ່ສອງຄົນ
- ໃນກໍລະນີທີ່ທ່ານກຳລັງຮັບເອົາເງິນຊ່ວຍເຫຼືອດ້ານການຈ້າງງານ.

ເງິນຄ່າລ້ຽງດູໃນຂະນະທ່ານຮັບເອົາການຊ່ວຍເຫຼືອດ້ານເງິນສົດ:
ຣັຖຈະເກັບເອົາເງິນຈ່າຍຄ່າລ້ຽງດູບາງສ່ວນ (ເງິນຈ່າຍໃນປັດຈຸບັນ ຫຼື ທີ່ຍັງຄ້າງຊຳລະ) ສຳລັບທ່ານ ແລະສະມາຊິກໃນຄອບຄົວຂອງທ່ານ. ຣັຖຈະບໍ່ເກັບເອົາເງິນຈ່າຍຄ່າລ້ຽງດູລູກຂອງທ່ານທັງໝົດ. ຣັຖຈະສົ່ງເງິນຄ່າລ້ຽງດູລູກໃນປັດຈຸບັນໃຫ້ທ່ານຈຳນວນ $50 ຕໍ່ລູກໜຶ່ງຄົນຕໍ່ເດືອນ ໂດຍສູງສຸດບໍ່ເກີນ $200 ຕໍ່ຄອບຄົວ ຕໍ່ເດືອນ. ຣັຖຈະບໍ່ນັບເງິນນີ້ວ່າເປັນເງິນລາຍໄດ້ໃນເວລາຄິດໄລ່ສິດທີ່ໄດ້ຮັບ ແລະເງິນຊ່ວຍເຫຼືອຕ່າງໆ ຂອງທ່ານ.

**ໝາຍເຫດ:** ຖ້າວ່າ ທ່ານສະໝັກຂໍການຊ່ວຍເຫຼືອດ້ານເງິນສົດ ແລະຢູ່ໃນຂໍ້ໃດໜຶ່ງຂ້າງລຸ່ມນີ້, ໂດຍທົ່ວໄປແລ້ວ ຣັຖຈະບໍ່ເກັບເອົາເງິນຄ່າລ້ຽງດູລູກໃດໆ ຂອງທ່ານ:

- ໂຄງການ SFPSS
- ໂຄງການ JOBS Plus
- ຄອບຄົວທີ່ມີພໍ່ແມ່ສອງຄົນ

ເມື່ອພວກເຮົາຕັດສິນຄຸນສົມບັດ ແລະຜົນປະໂຫຍດເງິນຊ່ວຍເຫຼືອຂອງທ່ານ, ຈຳນວນເງິນ $50 ຕໍ່ເດັກໜຶ່ງຄົນ ຕໍ່ເດືອນ ໂດຍບໍ່ເກີນ $200 ຕໍ່ຄອບຄົວ ຕໍ່ເດືອນ ສຳລັບເງິນຄ່າລ້ຽງດູລູກໃນປັດຈຸບັນ ຈະບໍ່ຖືກນັບໃສ່ວ່າເປັນເງິນລາຍໄດ້ປະຈຳເດືອນຂອງທ່ານ.

ເມື່ອທ່ານອອກຈາກໂຄງການຊ່ວຍເຫຼືອດ້ານເງິນສົດ:

- ເງິນຈ່າຍຄ່າລ້ຽງດູໃນປັດຈຸບັນຈະສົ່ງໃຫ້ທ່ານ.
- ຣັຖຈະເກັບກຳເອົາເງິນທີ່ຄ້າງຊຳລະໃດໆ ສຳລັບເດືອນຕ່າງໆ ທີ່ທ່ານໄດ້ຢູ່ໃນການຊ່ວຍເຫຼືອດ້ານເງິນສົດ.
- ທ່ານອາດສາມາດເກັບເອົາເງິນທີ່ຄ້າງຊຳລະໃດໆ ສຳລັບເດືອນຕ່າງໆ ທີ່ທ່ານບໍ່ໄດ້ຢູ່ໃນການຊ່ວຍເຫຼືອດ້ານເງິນສົດ.

ການເຮັດວຽກຮ່ວມກັບພະແນກດູແລຄ່າລ້ຽງດູລູກ
ໃນຂະນະທ່ານກຳລັງຮັບເອົາການຊ່ວຍເຫຼືອດ້ານເງິນສົດ, ທ່ານຈຳຕ້ອງເຮັດວຽກຮ່ວມມືກັບໂຄງການດູແລຄ່າລ້ຽງດູລູກຂອງຣັຖ.
**ສຳຄັນ:** ທ່ານບໍ່ຈຳເປັນຕ້ອງເຮັດວຽກກັບໂຄງການຄ່າລ້ຽງດູລູກ ຖ້າທ່ານຄິດວ່າ ການເກັບກຳເອົາເງິນຄ່າລ້ຽງດູລູກຈະເຮັດໃຫ້ທ່ານ ຫຼື ລູກຂອງທ່ານ ຕົກຢູ່ໃນອັນຕະລາຍ.
ການເຮັດວຽກຮ່ວມມືກັບໂຄງການຄ່າລ້ຽງດູລູກ ໝາຍຄວາມວ່າ ທ່ານຕ້ອງເຮັດສິ່ງຕໍ່ໄປນີ້:

- ຊ່ວຍໃນການຊອກຫາພໍ່ແມ່ອີກຝ່າຍໜຶ່ງຂອງລູກ.
- ກຳນົດຊື່ພໍ່ຂອງລູກຕາມກົດໝາຍ (ເພື່ອຈັດຕັ້ງຄວາມເປັນພໍ່).

- ຂໍເອົາຄຳສັ່ງຈ່າຍຄ່າລ້ຽງດູລູກ.

## ຂໍ້ມູນກ່ຽວກັບການຊ່ວຍເຫຼືອດ້ານການປິ່ນປົວ

ອ່ານຂໍ້ມູນນີ້ຢ່າງລະອຽດ

ຂໍ້ມູນທີ່ທ່ານໃຫ້ໄວ້ໃນຟອມນີ້ຈະຖືກນຳໄປກວດກາຄືນ ແລະກວດສອບຄວາມຖືກຕ້ອງໂດຍເຈົ້າໜ້າທີ່ຂອງຣັຖ, ຣັຖບານກາງ ແລະທ້ອງຖິ່ນ. ເມື່ອພວກເຮົາພິຈາລະນາຕັດສິນຄຸນສົມບັດຂອງທ່ານສຳລັບການຊ່ວຍເຫຼືອດ້ານການປິ່ນປົວ, ທາງ DHS ແລະ OHA ຈະນຳໃຊ້ສິ່ງຕໍ່ໄປນີ້:

- ລະບົບກວດສອບລາຍໄດ້ແລະຄຸນສົມບັດ (Income and Eligibility Verification System, IEVS)
- ລະບົບກວດສອບຊັບສິນ (Asset Verification System, AVS)

AVS ຈະຊອກຫາຂໍ້ມູນຕໍ່ໄປນີ້ກ່ຽວກັບທ່ານ ແລະສະມາຊິກໃນຄອບຄົວຂອງທ່ານ ຊຶ່ງຈຳເປັນໃນການໃຫ້ຂໍ້ມູນທາງການເງິນ ໃນເວລາທ່ານສະໝັກຂໍ ແລະຮັບເອົາການຊ່ວຍເຫຼືອດ້ານການປິ່ນປົວ. AVS ຊອກຫາສິ່ງຕໍ່ໄປນີ້, ບໍ່ວ່າທ່ານຈະລາຍງານຫຼືບໍ່ກໍຕາມ.

- ສະຖາບັນການເງິນ
  - ບັນຊີທະນາຄານ
  - ບັນຊີເຄຣດິດ ຢູນ່ຽນ
- ບັນທຶກອະສັງຫາລິມະຊັບ
  - ເຮືອນ
  - ທີ່ດິນ
- ບັນທຶກຍານພາຫະນະ
  - ພາຫະນະ

ຄູ່ສົມລົດຕາມກົດໝາຍຕ້ອງໃຫ້ຂໍ້ມູນທາງການເງິນ. ນອກຈາກນີ້ DHS ແລະ OHA ຍັງອາດເອົາຂໍ້ມູນໃດໆ ທີ່ຢູ່ໃນໃບສະໝັກຂອງທ່ານໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດ ເພື່ອຊ່ວຍໃນການຈັບກຸມບຸກຄົນທີ່ຫຼົບໜີກົດໝາຍ.

ການມອບໝາຍການຈ່າຍເງິນ ແລະ ການຍຶດຊັບສິນ

ເພື່ອໃຫ້ມີຄຸນສົມບັດໄດ້ຮັບການຊ່ວຍເຫຼືອດ້ານການປິ່ນປົວ, ທ່ານຕ້ອງປ່ອຍໃຫ້ DHS, OHA ແລະ CCO ຂອງທ່ານ ເກັບເງິນໃດໆ ທີ່:

- ທ່ານ ຫຼື ບຸກຄົນອື່ນ ທີ່ໄດ້ຮັບການຊ່ວຍເຫຼືອດ້ານການປິ່ນປົວຮ່ວມກັບທ່ານ, ຮັບເອົາ ຫຼື ມີສິດທີ່ຈະຮັບເອົາເງິນຈາກຝ່າຍທີ່ຮັບຜິດຊອບສຳລັບການບາດເຈັບ ຫຼື ຄ່າປິ່ນປົວ ທີ່ຈ່າຍຈາກເງິນຊ່ວຍເຫຼືອດ້ານການປິ່ນປົວ.

ນີ້ລວມເຖິງ ເງິນຈາກຂໍ້ໃດໆ ດັ່ງລຸ່ມນີ້:

- ປະກັນສຸຂະພາບຂອງເອກະຊົນ
- ປະກັນໄພຣົຖ
- ຜູ້ຄົນ
- ແຫຼ່ງອື່ນໆ

ສິ່ງນີ້ເອີ້ນວ່າ "ການມອບໝາຍການຈ່າຍເງິນ" ໃຫ້ແກ່ DHS ຫຼື OHA ແລະ CCO. ການມອບໝາຍການຈ່າຍເງິນ ແມ່ນອັດຕະໂນມັດສຳລັບບຸກຄົນທີ່ໄດ້ຮັບການຊ່ວຍເຫຼືອດ້ານການປິ່ນປົວ. ເພື່ອສືບຕໍ່ໄດ້ຮັບການຊ່ວຍເຫຼືອດ້ານການປິ່ນປົວ, ທ່ານ ແລະສະມາຊິກອື່ນໆ ໃນຄອບຄົວ (ຊຶ່ງລວມເຖິງ ລູກຄົນໃດໆ ກໍຕາມທີ່ຈະເກີດມາໃນອະນາຄົດ) ຕ້ອງຊ່ວຍ DHS ຫຼື OHA ຊອກຫາ ແລະຮັບເອົາການຈ່າຍເງິນເຫຼົ່ານີ້ໃນທຸກວິທີທາງດັ່ງລຸ່ມນີ້:

- ບອກ DHS, OHA ແລະ CCO ວ່າ ມີບຸກຄົນທີສາມເຮັດໃຫ້ທ່ານ ຫຼື ຄົນໃນຄອບຄົວຂອງທ່ານ ບາດເຈັບ ພາຍໃນ 10 ວັນ.
- ໃຫ້ຂໍ້ມູນກ່ຽວກັບຝ່າຍຕ່າງໆ ທີ່ເປັນສາເຫດໃຫ້ເກີດການບາດເຈັບ.
- ຊ່ວຍເຫຼືອກ່ຽວກັບຂໍ້ມູນອື່ນໃດກໍຕາມທີ່ຖືກຮຽກຮ້ອງເອົາ. ນີ້ລວມເຖິງ ຂໍ້ມູນກ່ຽວກັບການປະກັນໄພ. ມີການຈຳກັດຈຳນວນເງິນທີ່ DHS ຫຼື OHA ສາມາດເກັບເອົາໄດ້. ມັນຕ້ອງບໍ່ເກີນຈຳນວນເງິນທີ່ຈ່າຍຄ່າໃຊ້ຈ່າຍໃນການປິ່ນປົວ ຊຶ່ງ

ຝ່າຍທີ່ຮັບຜິດຊອບຕ້ອງຈ່າຍຕາມກົດໝາຍ. ຖ້າວ່າ ທ່ານໄດ້ຮັບ TANF ທ່ານອາດຕ້ອງຈ່າຍຄືນເງິນນັ້ນດ້ວຍເຊັ່ນກັນ. ເບິ່ງຂໍ້ມູນກ່ຽວກັບພາກສ່ວນ ການຊ່ວຍເຫຼືອດ້ານເງິນສົດ.

ພວກເຮົາອາດຕ້ອງຍຶດເອົາເງິນໃດໆ ທີ່ຈ່າຍໃຫ້ໂດຍຝ່າຍທີ່ຮັບຜິດຊອບ ເພື່ອຮັບປະກັນການຈ່າຍເງິນໃຫ້ແກ່ DHS, OHA ຫຼື CCO.

## ການເປີດເຜີຍຂໍ້ມູນ

ທ່ານຕ້ອງຕົກລົງຍິນຍອມວ່າ ຝ່າຍຕໍ່ໄປນີ້ສາມາດປ່ອຍ ຫຼື ເປີດເຜີຍບັນທຶກການປິ່ນປົວ ໃຫ້ແກ່ບໍລິສັດປະກັນໄພໄດ້:

- ຜູ້ໃຫ້ບໍລິການດ້ານການປິ່ນປົວ
- ໂຮງໝໍ
- ນາຍຈ້າງ
- ອົງການຂອງຣັຖບານ

ນີ້ລວມເຖິງ ບັນທຶກຕ່າງໆ ກ່ຽວກັບທ່ານ ແລະສະມາຊິກໃນຄອບຄົວທີ່ຢູ່ໃນການຊ່ວຍເຫຼືອດ້ານການປິ່ນປົວ. ການເຮັດສິ່ງນີ້ກໍເພື່ອວ່າ DHS ຫຼື OHA ຈະໄດ້ຮັບການຈ່າຍເງິນຄືນ.

## ຖ້າວ່າ ທ່ານມີປະກັນໄພອື່ນ

ຖ້າວ່າ ທ່ານ ຫຼື ສະມາຊິກໃນຄອບຄົວມີປະກັນສຸຂະພາບອື່ນໆ, ຈົ່ງບອກຜູ້ໃຫ້ບໍລິການ (ໝໍ, ຄລີນິກ, ຮ້ານຂາຍຢາ ຫຼື ໂຮງໝໍ) ກ່ອນທ່ານຈະຮັບການເບິ່ງແຍງຮັກສາ. ຖ້າວ່າ ທ່ານມີປະກັນຣົຖ ແລະໄດ້ຮັບບາດເຈັບໃນອຸບັດຕິເຫດທາງຣົຖ ຈົ່ງບອກຜູ້ໃຫ້ບໍລິການກ່ຽວກັບປະກັນໄພຣົຖຂອງທ່ານ. ເຂົາເຈົ້າຕ້ອງສົ່ງໃບເກັບຄ່າກັບບໍລິສັດປະກັນໄພກ່ອນເຂົາເຈົ້າຈະເກັບນຳ OHA. ຖ້າວ່າ DHS ຫຼື OHA ຈ່າຍໃບເກັບຄ່າປິ່ນປົວ ຊຶ່ງຄວນຈະຖືກຈ່າຍໂດຍບໍລິສັດປະກັນໄພ, ທາງ DHS ຫຼື OHA ຈະດຳເນີນການເພື່ອຂໍເອົາເງິນຄືນ. ຍົກຕົວຢ່າງ:

- ຖ້າວ່າ DHS ຫຼື OHA ຈ່າຍໃບເກັບຄ່າ ຊຶ່ງບໍລິສັດປະກັນໄພເອກະຊົນຄວນເປັນຜູ້ຈ່າຍ, ທາງ DHS ຫຼື OHA ຈະພະຍາຍາມທີ່ຈະຂໍເອົາເງິນຄືນຈາກບໍລິສັດປະກັນໄພ.
- ຖ້າວ່າ DHS ຫຼື OHA ຈ່າຍໃບເກັບຄ່າປິ່ນປົວ ແລະຜູ້ໃຫ້ບໍລິການຍັງຮັບເອົາເງິນຈ່າຍຈາກບໍລິສັດປະກັນໄພດ້ວຍ, ທາງ DHS ຫຼື OHA ຈະພະຍາຍາມທີ່ຈະເອົາເງິນຄືນຈາກຜູ້ໃຫ້ບໍລິການ.
- ຖ້າວ່າ DHS ຫຼື OHA ຈ່າຍໃບເກັບຄ່າປິ່ນປົວ ແລະບໍລິສັດປະກັນໄພສົ່ງເຊັກຈ່າຍໃຫ້ທ່ານສຳລັບໃບບິນນັ້ນ, ທາງ DHS ຫຼື OHA ຈະພະຍາຍາມເອົາເງິນຄືນຈາກທ່ານ.

## ໂຄງການການຊົດໃຊ້ຄືນຈາກຊັບສິນມໍລະດົກ (Estate Recovery Program)

ໂຄງການການຊົດໃຊ້ຄືນຈາກຊັບສິນມໍລະດົກ ແມ່ນໂຄງການທີ່ຊັບຊ້ອນ ຊຶ່ງນຳໃຊ້ກັບການຊ່ວຍເຫຼືອຕໍ່ໄປນີ້:

- ການຊ່ວຍເຫຼືອດ້ານການປິ່ນປົວ
- ການຊ່ວຍເຫຼືອທົ່ວໄປ
- ໂຄງການລາຍໄດ້ເສີມແຫ່ງຣັຖອໍຣິກອນ (Oregon Supplemental Income Program)
- ບຸກຄົນບາງຄົນທີ່ໄດ້ຮັບທັງ Medicare ແລະການຊ່ວຍເຫຼືອດ້ານການປິ່ນປົວໃນເວລາດຽວກັນ

ຈຸດປະສົງຂອງການຊົດໃຊ້ຄືນຈາກຊັບສິນມໍລະດົກ ແມ່ນເພື່ອສະແຫວງຫາການຈ່າຍເງິນຄືນຈາກຊັບສິນຂອງຜູ້ຮັບບໍລິການທີ່ເສັຽຊີວິດແລ້ວ. ເງິນບາງສ່ວນແມ່ນກັບຄືນໄປທີ່ຣັຖບານກາງ. ເງິນສ່ວນຍັງເຫຼືອແມ່ນນຳໃຊ້ເປັນທຶນໃຫ້ແກ່ໂຄງການຕ່າງໆ ເພື່ອປະຊາຊົນອື່ນໆ ທີ່ມີຄວາມຈຳເປັນ. ມີຂໍ້ຍົກເວັ້ນຫຼາຍຂໍ້ສຳລັບການຊົດໃຊ້ຄືນຈາກຊັບສິນມໍລະດົກ.

### ສິດທິຂອງຣັຖທີ່ຈະເອົາເງິນຊົດໃຊ້ຄືນຈາກຊັບສິນມໍລະດົກຂອງທ່ານເພື່ອໃຊ້ຄືນເງິນຊ່ວຍເຫຼືອຕ່າງໆ.

**DHS ແລະ OHA ອາດທວງເອົາເງິນ** ຈາກຊັບສິນມໍລະດົກຂອງທ່ານ (ຕາມທີ່ນິຍາມໄວ້ໃນ ORS 416.350) ຫຼັງຈາກທ່ານເສັຽຊີວິດ ຖ້າວ່າທ່ານມີເງື່ອນໄຂເຂົ້າຕາມສະຖານະການດັ່ງລຸ່ມນີ້.

- ຖ້າວ່າ ສິ່ງຕໍ່ໄປນີ້ເກີດຂຶ້ນ, ຈຳນວນເງິນຊ່ວຍເຫຼືອດ້ານການປິ່ນປົວອາດຈ່າຍຈາກຊັບສິນມໍລະດົກຂອງທ່ານ:
    - ທ່ານໄດ້ຮັບເງິນຊ່ວຍເຫຼືອດ້ານການປິ່ນປົວ ຫຼັງວັນທີ 1 ຕຸລາ 2013.
    - ທ່ານມີອາຍຸຫຼາຍກວ່າ 54 ປີ ແລະໄດ້ຮັບການຊ່ວຍເຫຼືອດ້ານການເບິ່ງແຍງໄລະຍະຍາວ.

  ນີ້ລວມເຖິງ ການຈ່າຍເງິນຈາກ Oregon Health Plan ຊຶ່ງຈ່າຍໃນນາມຂອງທ່ານ ໃຫ້ແກ່ແຜນການຈັດການເບິ່ງແຍງ ຫຼື ການຈ່າຍເງິນໃຫ້ແກ່ CCO.
- ຖ້າວ່າ ສິ່ງຕໍ່ໄປນີ້ເກີດຂຶ້ນ, ຈຳນວນເງິນຊ່ວຍເຫຼືອດ້ານການປິ່ນປົວອາດຈ່າຍຈາກຊັບສິນມໍລະດົກຂອງທ່ານ:
    - ທ່ານໄດ້ຮັບເງິນຊ່ວຍເຫຼືອດ້ານການປິ່ນປົວ ຫຼັງວັນທີ 1 ຕຸລາ 2013.
    - ທ່ານໄດ້ມີອາຍຸຫຼາຍກວ່າ 54 ປີ, ຫຼື ທ່ານມີສັນຍາທຣັສ (trusts) ໃນຮູບແບບໃດໜຶ່ງ:
        - ທຣັສຄວາມຈຳເປັນພິເສດ
        - ທຣັສສຳລັບຜູ້ມີລາຍໄດ້ເກີນຂີດຈຳກັດ (Income cap trusts)
- ຖ້າວ່າ ທ່ານໄດ້ຮັບເງິນຊ່ວຍເຫຼືອຜ່ານຮູບແບບໃດໆ ດັ່ງລຸ່ມນີ້, ກໍຈະມີການທວງເອົາເງິນຈາກຊັບສິນມໍລະດົກຂອງທ່ານ:
    - ໂຄງການລາຍໄດ້ເສີມແຫ່ງຣັຖອໍຣິກອນ (Oregon Supplemental Income Program)
    - ເງິນຊ່ວຍເຫຼືອທົ່ວໄປບາງຢ່າງ
    - ຣັຖໄດ້ຈ່າຍເງິນສົມທົບປະຈຳເດືອນແທນທ່ານ ເນື່ອງຈາກ ທ່ານໄດ້ຮັບທັງ ການຊ່ວຍເຫຼືອດ້ານການປິ່ນປົວ ແລະ Medicare ພາກ D.

DHS ແລະ OHA ຈະເລື່ອນເວລາການທວງເອົາເງິນ ຖ້າວ່າ ຄູ່ສົມລົດຂອງທ່ານຍັງມີຊີວິດຢູ່.

**DHS ແລະ OHA ຈະບໍ່ທວງເອົາເງິນນີ້ຈາກຊັບສິນມໍລະດົກຂອງທ່ານ** ຖ້າວ່າ ຄົນໃນຄອບຄົວຂອງທ່ານດັ່ງລຸ່ມນີ້ຍັງມີຊີວິດຢູ່:

- ລູກຄີງຂອງທ່ານ ຫຼື ເດັກທີ່ທ່ານເອົາມາລ້ຽງເປັນລູກ ມີອາຍຸຕ່ຳກວ່າ 21 ປີ. ໝາຍເຫດ: ນີ້ບໍ່ລວມເຖິງລູກລ້ຽງ.
- ລູກຄີງຂອງທ່ານ ຫຼື ເດັກທີ່ທ່ານເອົາມາລ້ຽງເປັນລູກ ບໍ່ວ່າອາຍຸເທົ່າໃດກໍຕາມ ເປັນຜູ້ຕາບອດ ຫຼື ພິການ ຕາມທີ່ນິຍາມໄວ້ໃນເກນຂອງປະກັນສັງຄົມ.

**ໝາຍເຫດ**: ກົດໝາຍ ແລະກົດລະບຽບ ກ່ຽວກັບການທວງໜີ້ຈາກຊັບສິນມໍລະດົກອາດປ່ຽນແປງໄດ້ໂດຍບໍ່ຕ້ອງແຈ້ງໃຫ້ຮູ້.

ບຸກຄົນໃດກໍຕາມທີ່ໄດ້ຮັບຊັບສິນຈາກມໍລະດົກຂອງຜູ້ຮັບບໍລິການ ອາດຂໍຮ້ອງໃຫ້ທາງ DHS ຫຼື OHA ຍົກເວັ້ນການຊົດໃຊ້ຄືນຈາກມໍລະດົກ ຖ້າວ່າ ເຂົາເຈົ້າມີເງື່ອນໄຂກົງຕາມຂໍ້ກຳນົດຂອງການມີພາວະທຸກຍາກ. ຄຳແນະນຳໃນການຮ້ອງຂໍເອົາການຍົກເວັ້ນດ້ວຍເຫດຜົນຂອງຄວາມທຸກຍາກ ແມ່ນຢູ່ໃນພາກສ່ວນຂອງຂໍ້ມູນທີ່ທາງພະແນກບໍລິຫານຊັບສິນມໍລະດົກ (Estate Administration Unit) ຈະສົ່ງໃຫ້ໃນເວລາທີ່ເຂົາເຈົ້າເລີ່ມດຳເນີນການເອົາການຊົດໃຊ້ຄືນ.

ຂໍ້ມູນຕິດຕໍ່ສຳລັບພະແນກບໍລິຫານຊັບສິນມໍລະດົກແມ່ນດັ່ງລຸ່ມ:

Estate Administration Unit PO Box
14021
Salem, OR 97309-5024
503-378-2884
1-800-826-5675 (ໃນຣັຖອໍຣິກອນເທົ່ານັ້ນ)
ແຟກຊ໌: 503-378-3137

# ຂໍ້ຈຳກັດດ້ານເວລາ

## ຂໍ້ຈຳກັດດ້ານເວລາສຳລັບ TANF

ອໍຣີກອນມີເວລາຈຳກັດຫ້າປີທີ່ຈະຮັບເອົາເງິນຊ່ວຍເຫຼືອ TANF. ກະລຸນາລົມປຶກສາກັບພະນັກງານກຳກັບການຊ່ວຍເຫຼືອຂອງທ່ານ ກ່ຽວກັບວ່າ ສິ່ງນີ້ສົ່ງຜົນກະທົບຕໍ່ທ່ານແນວໃດ.

## ຂໍ້ຈຳກັດດ້ານເວລາສຳລັບການຊ່ວຍເຫຼືອດ້ານເງິນສົດສຳລັບຜູ້ອົບພະຍົບ

ຊ່ວງເວລາສູງສຸດທີ່ອະນຸຍາດໃຫ້ສຳລັບການຊ່ວຍເຫຼືອດ້ານເງິນສົດສຳລັບຜູ້ອົບພະຍົບ ແມ່ນແປດເດືອນນັບຈາກເວລາໃດໜຶ່ງດັ່ງລຸ່ມ:

- ເວລາທີ່ທ່ານໄດ້ເຂົ້າມາໃນປະເທດ.
- ເວລາທີ່ທ່ານໄດ້ຮັບສະຖານະເປັນຄົນເຂົ້າເມືອງ.

ກະລຸນາລົມປຶກສາກັບພະນັກງານກຳກັບການຊ່ວຍເຫຼືອຂອງທ່ານ ກ່ຽວກັບວ່າ ສິ່ງນີ້ສົ່ງຜົນກະທົບຕໍ່ທ່ານແນວໃດ.

## ຂໍ້ຈຳກັດດ້ານເວລາສຳລັບໂຄງການຊ່ວຍເຫຼືອດ້ານອາຫານເສີມ ( Supplemental Nutrition Assistance Program, SNAP)

ຂໍ້ຈຳກັດດ້ານເວລາໃນການຮັບເອົາເງິນຊ່ວຍເຫຼືອ SNAP ແມ່ນສາມເດືອນເຕັມ ໃນຊ່ວງໄລຍະສາມປີສຳລັບຂ້າງລຸ່ມນີ້:

- ຜູ້ໃຫຍ່ທີ່ສາມາດເຮັດວຽກໄດ້ໂດຍປາດສະຈາກຜູ້ຢູ່ໃຕ້ການດູແລ

ບໍ່ດັ່ງນັ້ນ ກໍຈະມີຂໍ້ກຳນົດວຽກ. ຈົ່ງປຶກສາກັບພະນັກງານກຳກັບການຊ່ວຍເຫຼືອກ່ຽວກັບວ່າ ສິ່ງນີ້ອາດສົ່ງຜົນກະທົບຕໍ່ທ່ານແນວໃດ.

# ການລາຍງານການປ່ຽນແປງ

ຖ້າວ່າ ທ່ານຮັບເອົາເງິນຊ່ວຍເຫຼືອຈາກ DHS ຫຼື OHA, ທ່ານຕ້ອງລາຍງານການປ່ຽນແປງບາງຢ່າງ ທີ່ສົ່ງຜົນກະທົບຕໍ່ທ່ານ ແລະຜູ້ອື່ນໆ ທີ່ຮັບເອົາເງິນຊ່ວຍເຫຼືອຮ່ວມກັບທ່ານ. ຖ້າວ່າ ທ່ານບໍ່ລາຍງານການປ່ຽນແປງຕາມທີ່ກຳນົດໄວ້, ທ່ານອາດໄດ້ຮັບຜົນປະໂຫຍດເງິນຊ່ວຍເຫຼືອຫຼາຍເກີນໄປ. ໃຜກໍຕາມໃນເຮືອນຂອງທ່ານ ທີ່ອາຍຸ 18 ປີຂຶ້ນໄປ ອາດຖືກຂໍໃຫ້ຈ່າຍເງິນຊ່ວຍເຫຼືອຄືນ.

ເມື່ອໄດ້ຮັບອະນຸມັດສຳລັບຜົນປະໂຫຍດການຊ່ວຍເຫຼືອແລ້ວ, ແຈ້ງການຂອງທ່ານຈະບອກທ່ານວ່າ ທ່ານຕ້ອງລາຍງານເລື່ອງຫຍັງແດ່ ແລະຕ້ອງລາຍງານເມື່ອໃດ. ແຕ່ລະໂຄງການມີຂໍ້ກຳນົດກ່ຽວກັບການລາຍງານທີ່ແຕກຕ່າງກັນ. ສິ່ງທີ່ທ່ານຈຳເປັນຕ້ອງລາຍງານ ແລະວັນເວລາທີ່ຕ້ອງລາຍງານ ອາດແຕກຕ່າງກັນໄປ.
ເມື່ອທ່ານລາຍງານການປ່ຽນແປງ, ພະນັກງານກຳກັບການຊ່ວຍເຫຼືອຈະບອກໃຫ້ທ່ານຮູ້ ຖ້າວ່າ ທ່ານຈຳເປັນຕ້ອງໃຫ້ຫຼັກຖານ. ຖ້າວ່າ ການປ່ຽນແປງນັ້ນສົ່ງຜົນກະທົບຕໍ່ຜົນປະໂຫຍດອື່ນໆ ທີ່ທ່ານໄດ້ຮັບ, ທາງອົງການຈະບອກໃຫ້ທ່ານຮູ້. ຖ້າວ່າທ່ານບໍ່ແນ່ໃຈວ່າ ທ່ານຕ້ອງລາຍງານການປ່ຽນແປງໃດໜຶ່ງຫຼືບໍ່, ທ່ານສາມາດຖາມພະນັກງານກຳກັບການຊ່ວຍເຫຼືອໄດ້.

# ການລົງໂທດ

## ຂໍ້ມູນກ່ຽວກັບບົດລົງໂທດສຳລັບໂຄງການຊ່ວຍເຫຼືອດ້ານເງິນສົດ

ຖ້າວ່າ ທ່ານເຮັດສິ່ງໃດໜຶ່ງຂ້າງລຸ່ມນີ້ໂດຍເຈດຕະນາ ເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວທີ່ຈຳເປັນ (TANF) ຫຼື ການຊ່ວຍເຫຼືອດ້ານເງິນສົດສຳລັບຜູ້ອົບພະຍົບ (RCA) ຈະມີບົດລົງໂທດ:

- ໃຫ້ຂໍ້ມູນປອມກ່ຽວກັບທ່ານ ຫຼື ໃຜກໍຕາມທີ່ທ່ານສະໝັກໃຫ້.

- ປິດບັງຂໍ້ມູນກ່ຽວກັບທ່ານ ຫຼື ໃຜກໍຕາມທີ່ທ່ານສະໝັກໃຫ້.
- ໃຫ້ຂໍ້ມູນປອມກ່ຽວກັບວ່າ ທ່ານອາໄສຢູ່ບ່ອນໃດ.

ນີ້ແມ່ນສິ່ງທີ່ຈະເກີດຂຶ້ນ ຖ້າວ່າ ທ່ານເຮັດສິ່ງໃດໜຶ່ງຂ້າງເທິງນີ້:

- ຄັ້ງທໍາອິດ ທ່ານຈະບໍ່ໄດ້ຮັບ TANF ເປັນເວລາ 12 ເດືອນ.
- ຄັ້ງທີສອງ ທ່ານຈະບໍ່ໄດ້ຮັບ TANF ເປັນເວລາ 24 ເດືອນ.
- ຄັ້ງທີສາມ ທ່ານຈະບໍ່ໄດ້ຮັບ TANF ອີກເລີຍ.
- ທ່ານຈະຕ້ອງຈ່າຍຄືນເງິນຊ່ວຍເຫຼືອ TANF ທັງໝົດທີ່ທ່ານບໍ່ສົມຄວນໄດ້ຮັບ.
- ເງິນຊ່ວຍເຫຼືອດ້ານອາຫານຂອງທ່ານຈະບໍ່ເພີ່ມຂຶ້ນ ເຖິງແມ່ນວ່າ ທ່ານຈະໄດ້ຮັບ TANF ໜ້ອຍລົງ.

ໃນໂຄງການ TA-DVS ຖ້າວ່າ ທ່ານເຮັດສິ່ງໃດໜຶ່ງດັ່ງລຸ່ມນີ້ໂດຍເຈດຕະນາ, ທ່ານອາດຖືກລົງໂທດ:

- ໃຫ້ຂໍ້ມູນປອມກ່ຽວກັບການໄດ້ເບິ່ງແຍງ ແລະເປັນຜູ້ປົກຄອງຂອງລູກຂອງທ່ານ.
- ໃຫ້ຂໍ້ມູນປອມກ່ຽວກັບທີ່ຢູ່ອາໄສໃນອໍຣີກອນ.

## ຂໍ້ມູນກ່ຽວກັບບົດລົງໂທດຂອງໂຄງການຊ່ວຍເຫຼືອດ້ານອາຫານເສີມ (SNAP)

| ຖ້າວ່າ ທ່ານເຮັດສິ່ງຕໍ່ໄປນີ້: | ທ່ານຈະເສັຽເງິນຊ່ວຍເຫຼືອດ້ານອາຫານ ເປັນເວລາ<br>ດົນນານ: |
|---|---|
| • ປິດບັງຂໍ້ມູນ ຫຼື ໃຫ້ຄໍາຖະແຫຼງປອມ.<br>• ນໍາໃຊ້ບັດເງິນຊ່ວຍເຫຼືອ (EBT) ຊຶ່ງເປັນຂອງຜູ້ອື່ນ.<br>• ນໍາໃຊ້ເງິນຊ່ວຍເຫຼືອດ້ານອາຫານເພື່ອຊື້ເຫຼົ້າ ຫຼື ຢາສູບ.<br>• ແລກປ່ຽນ ຫຼື ຂາຍ ເງິນຊ່ວຍເຫຼືອ ຫຼື ບັດ EBT.<br>• ເອົາກ່ອງບັນຈຸໄປຖິ້ມສະເພາະເພື່ອຂໍເອົາການຈົດໃຊ້ຄືນເປັນເງິນສົດ.<br>• ເອົາອາຫານທີ່ຊື້ດ້ວຍເງິນຊ່ວຍເຫຼືອດ້ານອາຫານໄປຂາຍຕໍ່ເປັນເງິນສົດ. | • 12 ເດືອນສໍາລັບການກະທໍາຜິດຄັ້ງທໍາອິດ<br>• 24 ເດືອນສໍາລັບການກະທໍາຜິດຄັ້ງທີສອງ<br>• ເປັນການຖາວອນສໍາລັບການກະທໍາຜິດຄັ້ງທີສາມ |
| • ແລກປ່ຽນເງິນຊ່ວຍເຫຼືອດ້ານອາຫານກັບສານເສບຕິດ ເຊັ່ນ ຢາເສບຕິດ. | • 24 ເດືອນສໍາລັບການກະທໍາຜິດຄັ້ງທໍາອິດ<br>• ເປັນການຖາວອນສໍາລັບການກະທໍາຜິດຄັ້ງທີສອງ |
| • ແລກປ່ຽນເງິນຊ່ວຍເຫຼືອດ້ານອາຫານກັບປືນ, ອາວຸດ ຫຼື ລະເບີດ. | • ເປັນການຖາວອນ |
| • ແລກປ່ຽນ, ຊື້ ຫຼື ຂາຍຜົນປະໂຫຍດດ້ານອາຫານເປັນເງິນຈໍານວນ $500 ຂຶ້ນໄປ. | • ເປັນການຖາວອນ |
| • ໃຫ້ຂໍ້ມູນປອມກ່ຽວກັບວ່າ ທ່ານແມ່ນໃຜ ຫຼື ທ່ານອາໄສຢູ່ບ່ອນໃດ ເພື່ອທີ່ທ່ານຈະສາມາດຮັບເອົາເງິນຊ່ວຍເຫຼືອດ້ານອາຫານໄດ້ຫຼາຍຂຶ້ນ. | • 10 ປີສໍາລັບການກະທໍາຜິດແຕ່ລະຄັ້ງ |

ທ່ານຍັງອາດຕົກຢູ່ພາຍໃຕ້ສິ່ງຕໍ່ໄປນີ້:

- ຖືກປັບສູງເຖິງ $250,000
- ຕິດຄຸກເປັນເວລາດົນເຖິງ 20 ປີ
- ຖືກຂໍ້ຫາພາຍໃຕ້ກົດໝາຍຣັຖບານກາງ

| ຖ້າວ່າ ທ່ານເຮັດສິ່ງຕໍ່ໄປນີ້ໂດຍເຈດຕະນາ: | ທ່ານອາດຕົກຢູ່ພາຍໃຕ້ສິ່ງຕໍ່ໄປນີ້: |
|---|---|
| • ນໍາໃຊ້ບັດ EBT ຊຶ່ງບໍ່ແມ່ນຂອງທ່ານ.<br>• ໂອນຍ້າຍບັດ EBT ຂອງທ່ານໄປໃຫ້ຄົນອື່ນ.<br>• ເອົາ ຫຼື ມີບັດ EBT ຊຶ່ງບໍ່ແມ່ນຂອງທ່ານ. | • ຖືກຕັດສິນວ່າມີຄວາມຜິດອາຍາຮ້າຍແຮງ ຫຼື ໂທດຖານເບົາ.<br>• ຖືກປັບ.<br>• ຕິດຄຸກ.<br>• ບໍ່ມີຄຸນສົມບັດເໝາະສົມສໍາລັບການຊ່ວຍເຫຼືອດ້ານອາຫານເປັນເວລາໃດໜຶ່ງ. |

### ບົດລົງໂທດສໍາລັບການໂອນຍ້າຍຊັບສິນ

ທ່ານອາດບໍ່ມີຄຸນສົມບັດເໝາະສົມທີ່ຈະໄດ້ຮັບຜົນປະໂຫຍດການຊ່ວຍເຫຼືອບາງຢ່າງ ຖ້າວ່າ ທ່ານໂອນຍ້າຍຊັບສິນອອກໄປໃນມູນຄ່າຕໍ່າກວ່າມູນຄ່າຕົວຈິງ. ເມື່ອທ່ານໃຫ້ ຫຼື ຂາຍຊັບສິນ, ພວກເຮົາກ່າວວ່າ ທ່ານໂອນຍ້າຍຊັບສິນ. ຊັບສິນແມ່ນລາຍໄດ້

ແລະສິ່ງທີ່ມີມູນຄ່າ. ຕົວຢ່າງແມ່ນໄດ້ແກ່:
- ເຮືອນ
- ອະສັງຫາລິມະຊັບ
- ພາຫະນະ
- ເງິນ

ປຶກສາກັບພະນັກງານກຳກັບການຊ່ວຍເຫຼືອຂອງທ່ານ ກ່ອນທ່ານຈະຂາຍ ຫຼື ໃຫ້ຊັບສິນໃດໆ ອອກໄປ.

ຖ້າວ່າ ທ່ານໂອນຊັບສິນ ທ່ານອາດບໍ່ມີສິດເໝາະສົມສຳລັບຜົນປະໂຫຍດການຊ່ວຍເຫຼືອດັ່ງລຸ່ມນີ້:
- ການບໍລິການເບິ່ງແຍງໄລຍະຍາວ (LTC):
  - ເຮືອນອຸປະຖຳສຳລັບຜູ້ໃຫຍ່
  - ສະຖານພະຍາບານແບບຢູ່ອາໄສແລະມີການຊ່ວຍເຫຼືອ
  - ການບໍລິການໃນເຮືອນ
  - ສະຖານພະຍາບານ
  - ສະຖານເບິ່ງແຍງອື່ນໆ
- ເງິນສົດສຳລັບຜູ້ອົບພະຍົບ
- ການຊ່ວຍເຫຼືອດ້ານການປິ່ນປົວສຳລັບຜູ້ອົບພະຍົບ
- ເງິນຊ່ວຍເຫຼືອດ້ານອາຫານຈາກໂຄງການຊ່ວຍເຫຼືອດ້ານອາຫານເສີມ (SNAP)
- ການຊ່ວຍເຫຼືອດ້ານເງິນສົດຈາກໂຄງການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວທີ່ຈຳເປັນ (TANF).

ພວກເຮົາກວດກາເບິ່ງຍ້ອນຫຼັງກ່ອນທ່ານໄດ້ສະໝັກ ເພື່ອເບິ່ງວ່າ ໄດ້ມີການໂອນຍ້າຍຊັບສິນໃດໆ ບໍ່ທີ່ຈະສົ່ງຜົນໃຫ້ເກີດການລົງໂທດ.
- ສຳລັບ LTC ພວກເຮົາກວດກາເບິ່ງຍ້ອນຫຼັງ 5 ປີ.
- ສຳລັບ TANF ພວກເຮົາກວດກາເບິ່ງຍ້ອນຫຼັງ 3 ປີ.
- ສຳລັບເງິນສົດຊ່ວຍເຫຼືອສຳລັບຜູ້ອົບພະຍົບ ແລະການຊ່ວຍເຫຼືອດ້ານການປິ່ນປົວສຳລັບຜູ້ອົບພະຍົບ ພວກເຮົາກວດກາເບິ່ງຍ້ອນຫຼັງ 3 ປີ.
- ສຳລັບ SNAP ພວກເຮົາກວດກາເບິ່ງຍ້ອນຫຼັງ 3 ເດືອນ.

ບົດລົງໂທດສຳລັບການໂອນຍ້າຍຊັບສິນຈະເລີ່ມຕົ້ນເມື່ອທ່ານສະໝັກ ແລະມີຄຸນສົມບັດ. ການລົງໂທດຈະນຳໃຊ້ສະເພາະກັບເງິນຊ່ວຍເຫຼືອຕ່າງໆ ທີ່ບົ່ງໄວ້ຂ້າງເທິງ. ການລົງໂທດຈະເປັນການທີ່ພວກເຮົາຈະປະຕິເສດຄຳຮ້ອງຂໍຂອງທ່ານສຳລັບການຊ່ວຍເຫຼືອນັ້ນ. ຖ້າວ່າ ທ່ານໂອນຍ້າຍຊັບສິນໃນຂະນະທ່ານຮັບເອົາເງິນຊ່ວຍເຫຼືອ ກໍຈະມີການລົງໂທດດ້ວຍ. ການລົງໂທດຈະແມ່ນການຢຸດຕິການຊ່ວຍເຫຼືອນັ້ນເປັນໄລຍະເວລາໜຶ່ງ. ຖ້າວ່າ ເງິນຊ່ວຍເຫຼືອ LTC ຂອງທ່ານສິ້ນສຸດລົງ ມັນອາດເປັນການຫຼຸດຜ່ອນ ຫຼື ປິດການຊ່ວຍເຫຼືອດ້ານການປິ່ນປົວອື່ນໆ ຂອງທ່ານ.

## ຂໍ້ມູນສຳລັບໂຄງການທັງໝົດ

ນະໂຍບາຍການບໍ່ຈຳແນກບຸກຄົນ

ກະຊວງປະຊາສົງເຄາະ (DHS) ແລະ ອົງການສຸຂະພາບຣັຖອໍຣິກອນ (OHA) ບໍ່ຈຳແນກບຸກຄົນໃດໆ. ນີ້ໝາຍຄວາມວ່າ DHS ແລະ OHA ຈະຊ່ວຍທຸກຄົນທີ່ມີຄຸນສົມບັດເໝາະສົມ. DHS ແລະ OHA ຈະບໍ່ປະຕິບັດຕໍ່ບຸກຄົນໃດໆ ຢ່າງແຕກຕ່າງ ອັນເນື່ອງຈາກສິ່ງໃດໆ ຕໍ່ໄປນີ້:
- ອາຍຸ
- ເຊື້ອຊາດ
- ສີຜິວ
- ຊາດກຳເນີດ

- ເພດ
- ສາສະໜາ
- ຄວາມເຊື່ອທາງການເມືອງ*
- ຄວາມພິການ
- ຄວາມມັກຊອບທາງເພດ †
- ສະຖານະການແຕ່ງງານ‡

ທ່ານອາດຍື່ນຄໍາຮ້ອງທຸກ ຖ້າວ່າ ທ່ານເຊື່ອວ່າ DHS ຫຼື OHA ໄດ້ປະຕິບັດຕໍ່ທ່ານຢ່າງແຕກຕ່າງ ຍ້ອນເຫດຜົນໃດໜຶ່ງເຫຼົ່ານີ້. ຖ້າຕ້ອງການຍື່ນຄໍາຮ້ອງທຸກ, ທ່ານສາມາດໂທ ຫຼື ຂຽນເຖິງຫ້ອງການທະນາຍຄວາມຂອງຜູ້ວ່າການຣັຖ (Governor's Advocacy Office):

Governor's Advocacy Office 500 Summer Street NE, E17 Salem, OR 97301
503-945-6904
1-800-442-5238
TTY 711
ອີເມວ: DHS.info@dhsoha.state.or.us

## ໂອກາດທີ່ເທົ່າທຽມກັນແມ່ນກົດໝາຍ!

ພວກເຮົາຮັດວຽກຮ່ວມມືກັບກະຊວງກະສິກໍາແຫ່ງສະຫະຣັຖ ( U.S. Department of Agriculture, USDA) ແລະກະຊວງສາທາລະນະສຸກແລະປະຊາສົງເຄາະແຫ່ງສະຫະຣັຖ (U.S. Health & Human Services, HHS). ທັງສອງໜ່ວຍງານແມ່ນນາຍຈ້າງ ແລະຜູ້ໃຫ້ໂອກາດທີ່ເທົ່າທຽມກັນ. ການຊ່ວຍເຫຼືອສະໜັບສະໜູນ ແລະການບໍລິການຕ່າງໆ ມີໃຫ້ຕາມການຮ້ອງຂໍ ແກ່ບຸກຄົນທີ່ພິການ.

ເພື່ອຍື່ນຄໍາຮ້ອງທຸກກັບ USDA ແລະ HHS, ກະລຸນາອ່ານຟອມ "ຂໍ້ມູນກ່ຽວກັບການຮ້ອງທຸກເລື່ອງການຈໍາແນກຜູ້ຮັບບໍລິການ (Client Discrimination Complaint Information)" (DHS 9001). ທ່ານສາມາດຊອກເອົາຟອມນີ້ໄດ້ໃນ "ຊຸດເອກະສານຂໍ້ມູນແລະການສົ່ງຕໍ່ (Information and Referral Packet)" (DHS 6609).

*ຜູ້ຮັບບໍລິການຂອງ SNAP ໄດ້ຮັບການປົກປ້ອງຈາກການຖືກຈໍາແນກອັນເນື່ອງຈາກຄວາມເຊື່ອທາງການເມືອງ.
†ຄວາມມັກຊອບທາງເພດໄດ້ຮັບການປົກປ້ອງຈາກຣັຖ ແຕ່ບໍ່ແມ່ນກົດໝາຍຣັຖບານກາງ.
‡ຜູ້ຮັບບໍລິການດ້ານການປິ່ນປົວໄດ້ຮັບການປົກປ້ອງຈາກການຖືກຈໍາແນກອັນເນື່ອງຈາກສະຖານະດ້ານການແຕ່ງງານ.

## ເປັນຫຍັງພວກເຮົາຈຶ່ງຕ້ອງການເລກປະກັນສັງຄົມຂອງທ່ານ

ສິ່ງຕໍ່ໄປນີ້ກໍານົດໃຫ້ບຸກຄົນທີ່ສະໝັກຂໍຮັບເງິນຊ່ວຍເຫຼືອທີ່ເປັນເງິນສົດ ຫຼື ເງິນຊ່ວຍເຫຼືອດ້ານອາຫານ ຕ້ອງເອົາເລກປະກັນສັງຄົມ (SSN) ຂອງຕົນໃຫ້ແກ່ DHS ແລະ OHA:

- ກົດໝາຍຣັຖບານກາງ (42 USC 1320b-7(a) ແລະ (b), 7 USC 2011-2036, 42 CFR 435.910, 42 CFR 435.920 ແລະ 42 CFR 457.340(b))
- ກົດລະບຽບການບໍລິຫານຂອງຣັຖອໍຣິກອນ (Oregon Administrative Rule) (OAR 461-120-0210)

ຖ້າວ່າ ທ່ານໃຫ້ເລກ SSN, ມັນສາມາດຊ່ວຍເລັ່ງຂັ້ນຕອນການສະໝັກໃຫ້ໄວຂຶ້ນໄດ້. ຖ້າວ່າ ບາງຄົນບໍ່ມີເລກ SSN, ຈົ່ງເບິ່ງທີ່ເວັບໄຊ www.ssa.gov ສໍາລັບຂໍ້ມູນກ່ຽວກັບວິທີສະໝັກຂໍເອົາເລກ.

- DHS ແລະ OHA ຈະນໍາໃຊ້ເລກ SSN ເພື່ອຊ່ວຍຕັດສິນໃຈວ່າ ທ່ານມີຄຸນສົມບັດເໝາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອຫຼືບໍ່. ພວກເຮົາຈະນໍາໃຊ້ເລກ SSN ເພື່ອເຮັດສິ່ງຕໍ່ໄປນີ້:

- ກວດສອບລາຍໄດ້ຂອງທ່ານ
    - ກວດສອບຊັບສິນອື່ນໆ
    - ກວດກາໃສ່ກັບບັນທຶກອື່ນໆ ຂອງຣັຖ ແລະຣັຖບານກາງ ເຊັ່ນ ດັ່ງລຸ່ມນີ້:
        - ກົມພາສີ (Internal Revenue Service, IRS)
        - Medicaid
        - ພະແນກດູແລຄ່າລ້ຽງດູລູກ
        - ຫ້ອງການປະກັນສັງຄົມ
        - ຜົນປະໂຫຍດປະກັນໄພການຫວ່າງງານ
        - ໂຄງການຊ່ວຍເຫຼືອສາທາລະນະອື່ນໆ.
- DHS|OHA ອາດນຳໃຊ້ເລກ SSN ເພື່ອຕຽມການເກັບກຳຂໍ້ມູນ ຫຼື ລາຍງານຕ່າງໆ ທີ່ແຫຼ່ງທຶນສະໜັບສະໜູນໂຄງການຖາມເອົາໃນເວລາທ່ານສະໝັກຂໍ ຫຼື ຮັບເອົາຜົນປະໂຫຍດການຊ່ວຍເຫຼືອຕ່າງໆ.
- DHS ແລະ OHA ອາດນຳໃຊ້ ຫຼື ເປີດເຜີຍເລກ SSN ຂອງທ່ານ:
    - ຖ້າວ່າ ພວກເຮົາຕ້ອງການເລກນັ້ນເພື່ອດຳເນີນໂຄງການທີ່ທ່ານສະໝັກຂໍ ຫຼື ຮັບເອົາການຊ່ວຍເຫຼືອນຳ.
    - ເພື່ອດຳເນີນການປະເມີນຜົນຄຸນນະພາບ ແລະປັບປຸງກິດຈະກຳຕ່າງໆ.
    - ເພື່ອກວດສອບຈຳນວນການຈ່າຍເງິນທີ່ຖືກຕ້ອງ ແລະ ຊົດໃຊ້ຄືນສຳລັບເງິນທີ່ຈ່າຍໃຫ້ເກີນ.
    - ເພື່ອກວດສອບວ່າ ຄົນຜູ້ໜຶ່ງນັ້ນແມ່ນໄດ້ຮັບເງິນຊ່ວຍເຫຼືອໂດຍອ້າງການມີຄົວເຮືອນຫຼາຍກວ່າໜຶ່ງຄົວເຮືອນຫຼືບໍ່.

ພວກເຮົາບໍ່ຕ້ອງການໃຊ້ເລກປະກັນສັງຄົມສຳລັບການຊ່ວຍເຫຼືອດ້ານເງິນສົດສຳລັບຜູ້ອົບພະຍົບ ແລະການຊ່ວຍເຫຼືອດ້ານການເບິ່ງແຍງເດັກຍາມກາງເວັນຊຶ່ງກ່ຽວພັນກັບການຈ້າງງານ (ERDC).

ພວກເຮົາອາດສາມາດຍົກເວັ້ນຂໍ້ກຳນົດດ້ານເລກປະກັນສັງຄົມສຳລັບ TA-DVS. ທ່ານບໍ່ຈຳເປັນຕ້ອງຂໍເອົາເລກ ຫຼື ໃຫ້ເລກປະກັນສັງຄົມ ຖ້າວ່າ ມັນຈະເຮັດໃຫ້ທ່ານ ຫຼື ຄອບຄົວຂອງທ່ານ ຕົກຢູ່ໃນຄວາມສ່ຽງຂອງການເກີດຄວາມຮຸນແຮງໃນຄອບຄົວ.

ໂດຍການລົງຊື່ຂອງຂ້າພະເຈົ້າ (ຊຶ່ງລວມເຖິງ ການລົງຊື່ດ້ວຍວາຈາ ຫຼື ທາງອີເລັກໂຕຣນິກ), ຂ້າພະເຈົ້າຕົກລົງດັ່ງຕໍ່ໄປນີ້:

- ຂ້າພະເຈົ້າໄດ້ໃຫ້ຂໍ້ມູນທີ່ເປັນຈິງ, ຖືກຕ້ອງ ແລະຄົບຖ້ວນ ແກ່ DHS ແລະ OHA.
- ຂ້າພະເຈົ້າເຊັນຊື່ໃນໃບສະໝັກນີ້ ພາຍໃຕ້ບົດລົງໂທດຂອງການຕົວະ. ນັ້ນໝາຍຄວາມວ່າ, ພາຍໃຕ້ຄວາມຮູ້ອັນດີທີ່ສຸດຂອງຂ້າພະເຈົ້າ, ຂ້າພະເຈົ້າໄດ້ໃຫ້ຄຳຕອບທີ່ເປັນຈິງຕໍ່ທຸກຄຳຖາມທີ່ຢູ່ໃນຟອມນີ້. ຂ້າພະເຈົ້າຮູ້ວ່າ ພາຍໃຕ້ກົດໝາຍຂອງຣັຖບານກາງ ຖ້າວ່າ ຂ້າພະເຈົ້າໃຫ້ຂໍ້ມູນປອມ ຫຼື ບໍ່ຈິງ ຂ້າພະເຈົ້າອາດຕົກຢູ່ໃນພາວະຕໍ່ໄປນີ້:
    - ການລົງໂທດ
    - ຮັບຜິດຊອບສຳລັບການຈ່າຍເງິນເກີນ
- DHS ແລະ OHA ສາມາດກວດກາຄືນກ່ວະນີຂອງຂ້າພະເຈົ້າ. ນີ້ສາມາດລວມເຖິງການທີ່ DHS ມາທີ່ເຮືອນຂອງຂ້າພະເຈົ້າ.
- ຂ້າພະເຈົ້າຈະລາຍງານການປ່ຽນແປງຕ່າງໆ ກ່ຽວກັບຂໍ້ມູນທີ່ຂ້າພະເຈົ້າໃຫ້ແກ່ DHS ແລະ OHA ເມື່ອເຂົາເຈົ້າຮຽກຮ້ອງເອົາຈາກຂ້າພະເຈົ້າ.
- ຂ້າພະເຈົ້າໄດ້ໃຫ້ຂໍ້ມູນການເປັນພົນລະເມືອງທີ່ເປັນຈິງກ່ຽວກັບຂ້າພະເຈົ້າ ແລະຄົນອື່ນໆ ທີ່ຂ້າພະເຈົ້າສະໝັກໃຫ້ ຫຼື ຮັບເອົາຜົນປະໂຫຍດການຊ່ວຍເຫຼືອຕ່າງໆ.
- ຂ້າພະເຈົ້າຮູ້ວ່າ DHS ແລະ OHA ຈະກວດກາເບິ່ງສະຖານະດ້ານການເຂົ້າເມືອງຂອງຂ້າພະເຈົ້າ ແລະຄົນອື່ນໆ ທີ່ຂ້າພະເຈົ້າສະໝັກໃຫ້ ຫຼື ຮັບເອົາຜົນປະໂຫຍດການຊ່ວຍເຫຼືອຕ່າງໆ.
- ຂ້າພະເຈົ້າຮູ້ວ່າ ຂໍ້ມູນທີ່ທາງ DHS ແລະ OHA ໄດ້ຮັບຈາກກົມກວດຄົນເຂົ້າເມືອງແລະການເປັນພົນລະເມືອງສະຫະຣັຖ (U.S. Citizenship and Immigration Services, USCIS) ສາມາດສົ່ງຜົນກະທົບຕໍ່ບຸກຄົນຜູ້ທີ່ຮັບເອົາການຊ່ວຍເຫຼືອໄດ້. DHS ແລະ OHA ຈະບໍ່ຕິດຕໍ່ຫາ USCIS ສຳລັບໃຜກໍຕາມທີ່ບໍ່ໄດ້ຊອກຫາຜົນປະໂຫຍດການຊ່ວຍເຫຼືອຕ່າງໆ.

- ຂ້າພະເຈົ້າອະນຸຍາດການເປີດເຜີຍບັນທຶກກ່ຽວກັບຄ່າລ້ຽງດູລູກຂອງຂ້າພະເຈົ້າ ໃຫ້ແກ່ DHS ແລະ OHA ຈາກກະຊວງຍຸດຕິທັມ ( Department of Justice, DOJ), ພະແນກດູແລຄ່າລ້ຽງດູລູກ (Division of Child Support, DCS).
- ຜູ້ໃຫຍ່ທີ່ອາຍຸລະຫວ່າງ 16 ຫາ 60 ປີທີ່ຢູ່ໃນຟອມນີ້ ຊຶ່ງສະໝັກຂໍການຊ່ວຍເຫຼືອດ້ານອາຫານ (SNAP) ຈະຕ້ອງລົງທະບຽນເຂົ້າໃນໂຄງການຊ່ວຍເຫຼືອດ້ານການຈ້າງງານຂອງຣັຖ. ຖ້າວ່າ ຂ້າພະເຈົ້າເພີ່ມຊື່ຂອງບຸກຄົນທີ່ມີອາຍຸລະຫວ່າງນັ້ນ ເຂົ້າໃນໂຄງການໃນອະນາຄົດ, ເຂົາເຈົ້າກໍ່ຈະຕ້ອງລົງທະບຽນດ້ວຍ.
- ຖ້າວ່າ ຂ້າພະເຈົ້າບໍ່ໃຫ້ເລກປະກັນສັງຄົມແກ່ DHS ແລະ OHA ສໍາລັບບຸກຄົນທີ່ຕ້ອງການຜົນປະໂຫຍດການຊ່ວຍເຫຼືອ, ບຸກຄົນນັ້ນອາດບໍ່ສາມາດຮັບເອົາການຊ່ວຍເຫຼືອໄດ້.
- DHS ແລະ OHA ຈະບໍ່ນໍາໃຊ້ຄ່າໃຊ້ຈ່າຍດັ່ງຕໍ່ໄປນີ້ ໃນການຄິດໄລ່ເງິນຊ່ວຍເຫຼືອຂອງຂ້າພະເຈົ້າ ຖ້າວ່າ ຂ້າພະເຈົ້າບໍ່ລາຍງານຄ່າໃຊ້ຈ່າຍເຫຼົ່ານັ້ນ:
  - ທີ່ພັກອາໄສຊົ່ວຄາວ
  - ຄ່າປິ່ນປົວ
  - ການຝາກເບິ່ງແຍງເດັກ
  - ຄ່າລ້ຽງດູລູກຕາມຄໍາສັ່ງສານ
- DHS ແລະ OHA ອາດນໍາໃຊ້ຄອມພິວເຕີເພື່ອກວດກາຂໍ້ມູນທັງໝົດທີ່ຢູ່ໃນຟອມນີ້. ນີ້ລວມເຖິງ ການກວດສອບກັບບັນທຶກຕ່າງໆ ກັບສິ່ງດັ່ງລຸ່ມນີ້:
  - ທະນາຄານ
  - ລາຍໄດ້
  - ຜົນປະໂຫຍດປະກັນໄພການຫວ່າງງານ
- ຂ້າພະເຈົ້າເຂົ້າໃຈວ່າ DHS ແລະ OHA ອາດນໍາໃຊ້ ຫຼື ເປີດເຜີຍເລກ SSN ຂອງຂ້າພະເຈົ້າ ແລະເລກ SSN ຂອງແຕ່ລະຄົນທີ່ຂ້າພະເຈົ້າສະໝັກໃຫ້. ໃນພາກສ່ວນ ໂຄງການທັງໝົດ ຈະບອກເຫດຜົນ.
- DHS ແລະ OHA ອາດໃຫ້ຂໍ້ມູນທີ່ຢູ່ໃນຟອມນີ້ແກ່:
  - ອົງການຂອງຣັຖບານກາງ ແລະຣັຖ ທີ່ເປັນຜູ້ດໍາເນີນການກວດກາຄືນ.
  - ເຈົ້າໜ້າທີ່ຕໍາຫຼວດ, ເພື່ອຊ່ວຍຈັບກຸມບຸກຄົນທີ່ຫຼົບໜີກົດໝາຍ.
  - ອົງການຂອງຣັຖ ແລະຣັຖບານກາງ ແລະໜ່ວຍງານທວງໜີ້ເອກະຊົນ, ຖ້າວ່າ ຂ້າພະເຈົ້າຈໍາເປັນຕ້ອງຈ່າຍຄືນເງິນຊ່ວຍເຫຼືອໃດໆ ໃຫ້ແກ່ທາງ DHS ຫຼື OHA.
- DHS ແລະ OHA ອາດນໍາໃຊ້ຂໍ້ມູນຂອງຂາພະເຈົ້າ ເພື່ອບໍລິຫານຈັດການໂຄງການຊ່ວຍເຫຼືອສາທາລະນະອື່ນໆ ທີ່ຂ້າພະເຈົ້າໄດ້ຮັບຈາກ DHS ຫຼື OHA.
- ຂ້າພະເຈົ້າເຂົ້າໃຈວ່າ DHS ຫຼື OHA ອາດກວດກາເບິ່ງວ່າ ຂ້າພະເຈົ້ານໍາໃຊ້ ຫຼື ຖອນເງິນຊ່ວຍເຫຼືອທີ່ເປັນເງິນສົດຜ່ານບັດ Oregon Trail Card ຂອງຂ້າພະເຈົ້າຢູ່ບ່ອນໃດແດ່. ຂ້າພະເຈົ້າເຂົ້າໃຈວ່າ ຂ້າພະເຈົ້າຕ້ອງບໍ່ນໍາໃຊ້ບັດ Oregon Trail Card ເພື່ອໃຊ້ຈ່າຍເງິນ ຫຼື ຖອນເງິນຊ່ວຍເຫຼືອທີ່ເປັນເງິນສົດ ຢູ່ບ່ອນໃດໆ ດັ່ງນີ້:
  - ຮ້ານຂາຍເຫຼົ້າ. ນີ້ລວມເຖິງ ທຸລະກິດຂາຍຍ່ອຍ ຊຶ່ງຂາຍສະເພາະ ຫຼື ສ່ວນຫຼາຍ ຂາຍເບັຍ ຫຼື ວາຍ.
  - ຄາສິໂນ ຫຼື ບ່ອນຫຼິ້ນການພະນັນ.
  - ທຸລະກິດບັນເທີງສໍາລັບຜູ້ໃຫຍ່ລາຍຍ່ອຍ ຊຶ່ງມີຄົນເປືອຍ ຫຼື ນຸ່ງໂປ້. ນີ້ລວມເຖິງ ຮ້ານວີດີໂອສໍາລັບຜູ້ໃຫຍ່ ຊຶ່ງສ່ວນຫຼາຍ ຂາຍ ຫຼື ສະແດງວີດີໂອ ຫຼື ໜັງສໍາລັບຜູ້ໃຫຍ່.
  - ສະຖານທີ່ແຈກຈ່າຍກັນຊາ.

ຂ້າພະເຈົ້າເຂົ້າໃຈວ່າ ບຸກຄົນທີ່ເຊັນຊື່ໃສ່ໃນໃບສະໝັກຕ້ອງຈ່າຍເງິນຄືນໃຫ້ແກ່ DHS ຫຼື OHA ເມື່ອມີການຈ່າຍເງິນເກີນໃນກໍລະນີຂອງຂ້າພະເຈົ້າ. ບັນດາຄົນຜູ້ທີ່ຕ້ອງສະໝັກກັບຂ້າພະເຈົ້າ ແລະຕົວແທນທີ່ໄດ້ຮັບອະນຸຍາດ ຍັງອາດຕ້ອງຮັບຜິດຊອບສໍາລັບເງິນຈ່າຍເກີນນັ້ນດ້ວຍ.

ຖ້າວ່າ ຂ້າພະເຈົ້າແຕ່ງຕັ້ງຕົວແທນທີ່ໄດ້ຮັບອະນຸຍາດ ຫຼື ຜູ້ຮັບສໍາຮອງ, ຂ້າພະເຈົ້າເຂົ້າໃຈສິ່ງຕໍ່ໄປນີ້:

- ຖ້າວ່າ ເຂົາເຈົ້າໃຫ້ຂໍ້ມູນຜິດ ຫຼື ບໍ່ຄົບຖ້ວນ ເພື່ອໃຫ້ຄົວເຮືອນຂອງຂ້າພະເຈົ້າໄດ້ຮັບເງິນຊ່ວຍເຫຼືອຫຼາຍເກີນໄປ, ຂ້າ

ພະເຈົ້າຈະຕ້ອງຈ່າຍຄືນສໍາລັບເງິນສ່ວນທີ່ຈ່າຍເກີນນັ້ນ.

- ຜູ້ຮັບເງິນສໍາຮອງສາມາດເຂົ້າເຖິງເພື່ອນໍາໃຊ້ເງິນຊ່ວຍເຫຼືອຂອງຂ້າພະເຈົ້າໄດ້ຢ່າງເຕັມສ່ວນ. ຂ້າພະເຈົ້າບໍ່ສາມາດຂໍເອົາເງິນທົດແທນໄດ້ ຖ້າວ່າ ບຸກຄົນນີ້ນໍາໃຊ້ເງິນຊ່ວຍເຫຼືອນັ້ນໂດຍປາດສະຈາກການອະນຸຍາດຂອງຂ້າພະເຈົ້າ.
- ຂ້າພະເຈົ້າບໍ່ສາມາດໃຊ້ຕົວແທນທີ່ໄດ້ຮັບອະນຸຍາດ ຫຼື ຜູ້ຮັບເງິນສໍາຮອງໃນໂຄງການ TA-DVS ໄດ້.

**ຖ້າວ່າ ຂ້າພະເຈົ້າສະໝັກຂໍເອົາການຊ່ວຍເຫຼືອດ້ານເງິນສົດ** — ຂ້າພະເຈົ້າອະນຸຍາດໃຫ້ຣັຖມີສິດທີ່ຈະເກັບເອົາເງິນຈ່າຍຄ່າລ້ຽງດູ. ສິ່ງນີ້ແມ່ນອະທິບາຍໄວ້ໃນຂໍ້ມູນໂຄງການ, ຫົວຂໍ້ການຊ່ວຍເຫຼືອດ້ານເງິນສົດ. ຂ້າພະເຈົ້າເຂົ້າໃຈວ່າ ຂ້າພະເຈົ້າບໍ່ຈໍາເປັນຕ້ອງເຮັດວຽກກັບໂຄງການດູແລດ້ານຄ່າລ້ຽງດູລູກ ຖ້າວ່າ ມັນຈະເຮັດໃຫ້ຂ້າພະເຈົ້າ ຫຼື ລູກຂອງຂ້າພະເຈົ້າຕົກຢູ່ໃນອັນຕະລາຍ.

**ຖ້າວ່າ ຂ້າພະເຈົ້າຈະສະໝັກຂໍຮັບການຊ່ວຍເຫຼືອດ້ານເງິນສົດ ແລະອາຫານ** — ຂ້າພະເຈົ້າເຂົ້າໃຈວ່າ ຂ້າພະເຈົ້າບໍ່ສາມາດຮັບເອົາເງິນຊ່ວຍເຫຼືອດ້ານອາຫານຈາກໂຄງການແຈກຢາຍອາຫານໃນເຂດອະນຸລັກອິນດຽນແດງ (Food Distribution Program on Indian Reservations, FDPIR) ແລະ SNAP ໃນເວລາດຽວກັນ.

**ຖ້າວ່າ ຂ້າພະເຈົ້າສະໝັກຂໍການຊ່ວຍເຫຼືອດ້ານການເບິ່ງແຍງເດັກຍາມກາງເວັນຊຶ່ງກ່ຽວພັນກັບການຈ້າງງານ** — ຂ້າພະເຈົ້າເຂົ້າໃຈວ່າ ເງິນຊ່ວຍເຫຼືອຄ່າເບິ່ງແຍງເດັກໃດໆ

ທີ່ຂ້າພະເຈົ້າໄດ້ຮັບ ຈະຖືກລາຍງານຕໍ່ກົມພາສີຂອງຣັຖອໍຣິກອນ ( Oregon Department of Revenue). ນີ້ອາດສົ່ງຜົນກະທົບຕໍ່ໜີ້ພາສີຂອງຂ້າພະເຈົ້າ ຫຼື ໂອກາດທີ່ຈະໄດ້ເງິນຄືນຈາກພາສີ.

**ຖ້າວ່າ ຂ້າພະເຈົ້າສະໝັກຂໍການຊ່ວຍເຫຼືອດ້ານການປິ່ນປົວ** – ຂ້າພະເຈົ້າເຂົ້າໃຈວ່າ ການບໍລິການດ້ານການປິ່ນປົວແລະອຸປະກອນບາງຢ່າງ ຈໍາເປັນຕ້ອງມີການອະນຸມັດລ່ວງໜ້າ (prior authorization, PA). ຂ້າພະເຈົ້າຈໍາເປັນຕ້ອງມີ PA ຈາກ DHS ຫຼື OHA ຫຼື ແຜນການຈັດການເບິ່ງແຍງ ກ່ອນຂ້າພະເຈົ້າຈະສາມາດຮັບການບໍລິການ.

ຂ້າພະເຈົ້າ ແລະຄູ່ສົມລົດຂອງຂ້າພະເຈົ້າຕົກລົງວ່າ ເງິນລາຍປີໃດໆ ທີ່ພວກເຮົາລາຍງານ, DHS ຫຼື OHA ຈະກາຍເປັນຜູ້ຮັບຜົນປະໂຫຍດ.